ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 0817/ຜ-ຟຟລ
ນະຄອນຫຼວງວຽງຈັນ, ວັນທີ 08 ພຶດສະພາ 2020

ໜັງສືແຈ້ງເຊີນ

ຮຽນ: ທ່ານຜູ້ຖືຮຸ້ນ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019

- ອີງຕາມ ແຈ້ງການສະບັບເລກທີ 0814/ຜ-ຟຟລ, ລົງວັນທີ 05/05/2020.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("**ບໍລິສັດ**") ຂໍຖືເປັນກຽດຮຽນເຊີນທ່ານເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ໃນວັນທີ 29 **ພຶດສະພາ 2020** ເວລາ **15:00** ໂມງ (ເລີ່ມລົງທະບຽນເວລາ **13:00** ໂມງ), ທີ່ຫ້ອງປະຊຸມຊັ້ນ 1, ອາຄານສຳນັກງານໃຫຍ່ ຂອງລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ. ບໍລິສັດໄດ້ແຈ້ງວັນ, ເວລາ ແລະ ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ຜ່ານເວັບໄຊທ໌ຂອງບໍລິສັດ (www.edlgen.com.la) ແລະ ລະບົບຂໍ້ມູນຂ່າວສານຂອງຕະຫຼາດຫຼັກຊັບລາວ (www.lsx.com.la).

ກຳນົດວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019, ໃນວັນທີ **12 ມີນາ 2020**, ຊຶ່ງໄດ້ເປີດເຜີຍໃຫ້ບັນດາທ່ານຊາບແລ້ວ.

ຫວັງວ່າທ່ານຄົງສະຫຼະເວລາອັນມີຄ່າ ເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ດ້ວຍຄວາມນັບຖືເປັນຢ່າງສູງ,

ປະທານສະພາບໍລິຫານ

ກະຊວງ ພະລັງງານ ແລະ ບໍ່ແຮ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company ນະຄອນ ຫຼວງ ວຽງຈັນ

ປອ. ຄຳມະນີ ອິນທິລາດ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

<u>ເອກະສານຄັດຕິດ:</u>

1. ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019.
2. ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2018.
3. ລາຍງານການເງິນປະຈຳປີ 2019.
4. ຊີວະປະຫວັດຫຍໍ້ ຂອງສະພາບໍລິຫານ.
5. ໃບມອບສັນທະ.
6. ເອກະສານ ແລະ ຫຼັກຖານທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ເພື່ອການສະເໜີໂຕໃນການເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ.
7. ແຜນທີ່ຂອງສະຖານທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019.

<u>ໝາຍເຫດ</u>:

1. ເນື່ອງຈາກສະພາບການແຜ່ລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ໄດ້ຂະຫຍາຍເປັນວົງກວ້າງໃນຫຼາຍປະເທດ. ເພື່ອປ້ອງກັນ, ສະກັດກັ້ນບໍ່ໃຫ້ມີການຕິດເຊື້ອ ແລະ ແຜ່ລະບາດ, ຂໍແຈ້ງມາຍັງບັນດາທ່ານຜູ້ຖືຮຸ້ນຊາບຄື:
   1.1 ຜູ້ຖືຮຸ້ນທຸກໆທ່ານ ສາມາດດາວໂຫຼດເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດໃນເວັບໄຊທ໌ ຂອງບໍລິສັດ ແລະ ເວັບໄຊທ໌ ຂອງຕະຫຼາດຫຼັກຊັບລາວ ຫຼື ໄປຮັບເອົາໜັງສືເຊີນພ້ອມເອກະສານຄັດຕິດຢູ່ຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນເໜືອ, ຖະໜົນ T4, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ. ໂທລະສັບ +85621 454361-4. ເລີ່ມແຕ່ວັນທີ **08 ພຶດສະພາ 2020.**
   1.2 ຜູ້ຖືຮຸ້ນສາມາດສົ່ງຄຳຖາມທີ່ຕິດພັນກັບວາລະກອງປະຊຸມຜູ້ຖືຮຸ້ນມາກ່ອນມື້ປະຊຸມ ແລະ ບໍລິສັດຈະຕອບຄຳຖາມໃນບົດບັນທຶກກອງປະຊຸມ.
   1.3 ສະເໜີຜູ້ຖືຮຸ້ນມອບໝາຍໃຫ້ກຳມະການອິດສະຫຼະ ຂອງບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສັນທະ ຕາມ **<u>ເອກະສານຄັດຕິດ 5</u>** ທີ່ໄດ້ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ ແລະ ໝາຍ (✔) ເພື່ອເລືອກເອົາກຳມະການອິດສະຫຼະຂອງບໍລິສັດທ່ານໃດໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສັນທະດັ່ງກ່າວພ້ອມເອກະສານປະກອບມາທາງທີ່ຢູ່ອີເມລຂອງບໍລິສັດ: edlgenhq@edlgen.com.la ຫຼື ໄປສະນີເຖິງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນຊັ້ນ 07, **ພະແນກເລຂານຸການບໍລິສັດ**, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ.2392. ແລະ **ກະລຸນາສົ່ງກ່ອນວັນທີ 29 ພຶດສະພາ 2020**.
2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼືໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ.
3. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມປະຊຸມຈະຕ້ອງນຳເອກະສານ ຫຼືຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນ **<u>ເອກະສານຄັດຕິດ 6</u>** ທີ່ໄດ້ຄັດຕິດມາພ້ອມນີ້ ແລະ ສົ່ງມອບໃຫ້ປະທານໃນກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້.
4. ຖ້າຫາກທ່ານມີຂໍ້ສົງໄສ ຫຼື ຄຳຖາມກ່ຽວກັບການມອບສັນທະ, ທ່ານສາມາດສອບຖາມ ທ່ານ ນາງ ໂພຄົນ ອັບໄພ ໂທ: (856-20) 5454 9978, ທ່ານ ບຸນເກີດ ໄຊຍະສອນ ໂທ: (856-20) 2224 8202 ແລະ ທ່ານ ພຸດທະສອນ ອິນທະປັນຍາ ໂທ: (856-20) 5554 1155 ໃນໂມງລັດຖະການ.

ວາລະທີ 1. ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຜ່ານມາ.

ລາຍລະອຽດ:

ລາຍງານຜົນການຈັດຕັ້ງປະຕິບັດ ມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຄັ້ງຜ່ານມາ ເພື່ອໃຫ້ຜູ້ຖືຮຸ້ນ ຮັບຊາບເຖິງຜົນສຳເລັດ ການຈັດຕັ້ງປະຕິບັດມະຕິກອງປະຊຸມດັ່ງກ່າວ.

I. ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018

1. ກ່ຽວກັບວາລະທີ 1,2,3,4,5,6, ແມ່ນໄດ້ຈັດຕັ້ງປະຕິບັດຕາມແຜນການເຫັນດີ ຂອງປະຊຸມສາມັນຜູ້ຖືຮຸ້ນ ແລ້ວ.
2. ກ່ຽວກັບວາລະທີ 7 ແມ່ນກຳລັງດຳເນີນເອກະສານທາງດ້ານນິຕິກຳຕ່າງໆເປັນຕົ້ນ ການຂໍອະນຸມັດກໍ່ສ້າງຈາກ ພະແນກໂຍທາທິການ ແລະ ຂົນສົ່ງນະຄອນຫຼວງວຽງຈັນ. ສຳລັບວຽກງານດ້ານການເງິນກຳລັງລໍຖ້າອະນຸມັດ ເງິນກູ້ຢືມຈາກທະນາຄານ ICBC, ສ່ວນວຽກດ້ານການອອກແບບໄດ້ສຳເລັດ Concept Design, Basic Design ແລະ Detail Design ແລະ ສຳເລັດສັນຍາຜູ້ຮັບເໝົາຫຼັກ (Head Contractor).

ຄຳເຫັນຂອງສະພາບໍລິຫານ:

ລາຍງານການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປີຜ່ານມາ ແມ່ນລາຍງານໃຫ້ຜູ້ຖືຮຸ້ນຮັບ ຊາບເທົ່ານັ້ນ, ໂດຍວາລະນີ້ແມ່ນບໍ່ມີການລົງຄະແນນສຽງ.

ວາລະທີ 2. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018.

ລາຍລະອຽດ:

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ໄດ້ຈັດຂຶ້ນໃນວັນທີ **09 ເມສາ 2019**, ຊຶ່ງບໍລິສັດໄດ້ມີການ ບັນທຶກກອງປະຊຸມດັ່ງກ່າວ ມີລາຍລະອຽດໃນ **ເອກະສານຄັດຕິດ 2** ທີ່ໄດ້ຄັດຕິດມາພ້ອມນີ້.

ຄຳເຫັນຂອງສະພາບໍລິຫານ:

ບົດບັນທຶກກອງປະຊຸມ ມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018, ວັນທີ 09 ເມສາ 2019.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດ ໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າ ເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3. ພິຈາລະນາ ແລະ ຮັບຮອງລາຍງານການເງິນ 6 ເດືອນຕົ້ນປີ 2019 ແລະ ການບໍ່ຈ່າຍເງິນປັນຜົນຈາກ ການດຳເນີນທຸລະກິດ 6 ເດືອນຕົ້ນປີ 2019.

ລາຍລະອຽດ:

ອີງຕາມການມອບອຳນາດ ຈາກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2012 ຄັ້ງວັນທີ 22 ເມສາ 2013. ການເຄື່ອນໄຫວທຸລະກິດ ຂອງບໍລິສັດໃນ 6 ເດືອນຕົ້ນປີ 2019 ຂາດທຶນເປັນຈຳນວນເງິນ **147,15** ຕື້ກີບ,

ຊຶ່ງຜູ້ກວດສອບພາຍນອກໄດ້ມີການທົບທວນແລ້ວ ແລະ ບໍລິສັດໄດ້ເປີດເຜີຍລາຍງານດັ່ງກ່າວ ໃນເວັບໄຊທ໌ ຂອງ ຕະຫລາດຫລັກຊັບລາວ ແລະ ເວັບໄຊທ໌ຂອງບໍລິສັດ.

ບໍລິສັດບໍ່ອະນຸມັດຈ່າຍເງິນປັນຜົນ 6 ເດືອນຕົ້ນປີ 2019 ໃຫ້ຜູ້ຖືຮຸ້ນ ເນື່ອງຈາກວ່າບໍ່ມີກຳໄລໃນການດຳເນີນ ທຸລະກິດ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບ ຮອງເອົາລາຍງານການເງິນ 6 ເດືອນຕົ້ນປີ 2019 ແລະ ບໍ່ອະນຸມັດການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2019.

<u>ຄະແນນສຽງທີ່ຕ້ອງໃຊ້:</u>

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4. ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2019 ລວມທັງລາຍ ງານການເງິນຂອງບໍລິສັດ ປີ 2019 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດປີ 2020.

<u>ລາຍລະອຽດ:</u>

I. <u>ລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປີ 2019</u>

ການການດຳເນີນທຸລະກິດ ຂອງ ຜ-ຟຟລ ໃນປີ 2019 ແມ່ນໄດ້ຜະລິດກະແສໄຟຟ້າຂາຍຍົກໃຫ້ ລັດວິສາຫະກິດໄຟຟ້າລາວ ຕາມສັນຍາຊື້-ຂາຍໄຟຟ້າ (PPA) ແລະ ດຳເນີນການຕາມກົດໝາຍ ແລະ ກົດລະບຽບຕ່າງໆ ຂອງບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫລາດຫລັກຊັບລາວ, ມີທຶນຈົດທະບຽນຈຳນວນ 6.717.214.788.000 ກີບ, ມີຮຸ້ນສາມັນເທົ່າກັບ 1.679.303.697 ຮຸ້ນ; ຊຶ່ງຜົນການດຳເນີນທຸລະກິດໃນປີ 2019 ສາມາດສັງລວມໄດ້ດັ່ງນີ້:

1. ການຜະລິດ:

ກຳລັງຕິດຕັ້ງທັງໝົດມີ 1.231,20 MW, ໃນນີ້ກຳລັງຕິດຕັ້ງທີ່ຜ-ຟຟລ ຄຸ້ມຄອງ 100% ມີ 699 MW, ຜ-ຟຟລ ເຂົ້າຖືຮຸ້ນໃນ 7 ເຂື່ອນຜູ້ຜະລິດໄຟຟ້າເອກະລາດ ມີ 513 MW (ຕາມຊັດສ່ວນການຖືຮຸ້ນ) ແລະ ຈາກ ບໍລິສັດ ອີດີເອວ-ເຈນ ໂຊລ່າ ພາວເວີ້ ຈຳກັດ ທີ່ ຜ-ຟຟລ ເຂົ້າຖືຮຸ້ນມີ 19,20 MW (ຕາມຊັດສ່ວນການຖືຮຸ້ນ).

ໃນປີ 2019 ເຂື່ອນໄຟຟ້າທີ່ ຜ-ຟຟລ ຄຸ້ມຄອງ 100% ສາມາດຜະລິດກະແສໄຟຟ້າທັງໝົດ 2.148,97 GWh. ຊຶ່ງໃນນີ້ການຜະລິດຈາກ 7 ເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ ຜ-ຟຟລ ເຂົ້າຖືຮຸ້ນສາມາດຜະລິດກະແສໄຟຟ້າທັງ ໝົດ 1.958,52 GWh (ຕາມຊັດສ່ວນການຖືຮຸ້ນ) ແລະ ການຜະລິດຈາກບໍລິສັດ ອີດີເອວ-ເຈນ ໂຊລ່າ ພາວເວີ້ ຈຳກັດ ທີ່ ຜ-ຟຟລ ເຂົ້າຖືຮຸ້ນສາມາດຜະລິດກະແສໄຟຟ້າທັງໝົດ 24,85 GWh (ຕາມຊັດສ່ວນການຖືຮຸ້ນ). ລວມການຜະລິດ ທັງໝົດໃນປີ ປະຕິບັດໄດ້ 4.132,35 GWh.

2. ລາຍຮັບ ແລະ ລາຍຈ່າຍ

ລາຍຮັບສ່ວນໃຫຍ່ ຂອງ ຜ-ຟຟລ ແມ່ນມາຈາກການຈຳໜ່າຍກະແສໄຟຟ້າໃຫ້ ຟຟລ, ຊຶ່ງໃນປີ 2019, ຜ-ຟຟລ ສາມາດສ້າງລາຍຮັບໄດ້ 1.226,97 ຕື້ກີບ ແລະ ມີລາຍຈ່າຍທັງໝົດໃນການດຳເນີນທຸລະກິດຈຳນວນ 1.433,32 ຕື້ກີບ.

3. ກຳໄລ:

* ຈາກການດຳເນີນທຸລະກິດ ຂອງ ຜ-ຟຟລ ຈະຂາດຖຸນ 131,82 ຕື້ກີບ.
* ກຳໄລສຸດທິຈາກການລົງທຶນໃນເຂື່ອນຜູ້ຜະລິດໄຟຟ້າເອກະລາດຈຳນວນ 339,38 ຕື້ກີບ.

ລວມກຳໄລສຸດທິໃນປີ 2019 ທັງໝົດ 207,55 ຕື້ກີບ.

(ລາຍງານການເງິນມີລາຍລະອຽດໃນເອກະສານຄັດຕິດ 3)

4. ການມອບພັນທະໃຫ້ລັດ:

ຜ-ຟຟລ ໄດ້ມອບພັນທະໃຫ້ລັດຖະບານ ໃນປີ 2019 ປະກອບມີຄ່າພາກຫຼວງ 1% ຂອງລາຍຮັບຈາກການຂາຍກະແສໄຟຟ້າ, ອາກອນກຳໄລ 10%, ອາກອນເງິນປັນຜົນ 10% ແລະ ອາກອນລາຍໄດ້ຂອງບຸກຄົນ ລວມທັງໝົດ 105,82 ຕື້ກີບ.

5. ດ້ານບຸກຄະລາກອນ ແລະການພັດທະນາຊັບພະຍາກອນມະນຸດ:

ຈຳນວນພະນັກງານ ຂອງ ຜ-ຟຟລ ມີທັງໝົດ 717 ຄົນ, ໃນນີ້ຍິງ 125 ຄົນ, ໃນປີ 2019 ໄດ້ສົ່ງໄປຝຶກອົບຮົມໄລຍະສັ້ນພາຍໃນ ແລະຕ່າງປະເທດ ມີທັງໝົດ 2,611 ເທື່ອຄົນ.

6. ກິດຈະກຳສຳຄັນພາຍໃນປີ ດ້ານສັງຄົມ ແລະ ສິ່ງແວດລ້ອມ:

ບໍລິສັດຍາມໃດກໍໄດ້ເອົາໃຈໃສ່ວຽກງານດ້ານສັງຄົມ ແລະ ສິ່ງແວດລ້ອມ ເປັນຕົ້ນຄື:

1) ໄດ້ຈັດພິທີປູກຕົ້ນໄມ້ ແລະ ປ່ອຍປາ ທີ່ເຂື່ອນໄຟຟ້ານ້ຳມັງ 3, ເມືອງທຸລະຄົມ, ແຂວງວຽງຈັນ ໃນວັນທີ 31 ພຶດສະພາ 2019 ແລະ ວັນທີ 12 ກໍລະກົດ 2019 ເນື່ອງໃນໂອກາດ ວັນປູກຕົ້ນໄມ້ແຫ່ງຊາດ ວັນທີ 01 ມິຖຸນາ ປີ 2019 ແລະ ເຂື່ອນໄຟຟ້ານ້ຳງື່ມ 1 ຮ່ວມກັບອຳນາດການປົກຄອງ ບ້ານນາແຊະ, ເມືອງແກ້ວອຸດົມ, ແຂວງວຽງຈັນ ຈັດພິທີປ່ອຍປາສູ່ທຳມະຊາດ ເພື່ອສະເຫຼີມສະຫຼອງວັນປ່ອຍປາ, ອະນຸລັກສັດນ້ຳ ແລະ ສັດປ່າແຫ່ງຊາດ ວັນທີ 13 ສິງຫາ ທີ່ວັງສະຫງວນ ບ້ານນາແຊະ, ເມືອງແກ້ວອຸດົມ, ແຂວງວຽງຈັນ.
2) ຜ-ຟຟລ ໄດ້ມອບອຸປະກອນການສຶກສາ ແລະ ກິລາ ພ້ອມດ້ວຍເຄື່ອງອຸປະໂພກ-ບໍລິໂພກ, ເງິນອຸປະຖຳ ບູລະນະສ້ອມແປງເປັນຕົ້ນແມ່ນ: ນ້ອງໆນັກຮຽນ ແລະ ຄູອາຈານ ທີ່ ໂຮງຮຽນປະຖົມບ້ານໜອງຄຳ, ເມືອງ ໂພນໄຊ ແຂວງຫຼວງພະບາງ, ໂຮງຮຽນປະຖົມສົມບູນບ້ານສາມັກຄີໄຊ, ເມືອງຊຽງເງິນ, ແຂວງຫຼວງພະບາງ ແລະ ຄອບຄົວຜູ້ຢູ່ທີ່ອາໄສອ້ອມຂ້າງເຂື່ອນ ທີ່ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມໃນເດືອນກັນຍາ.
3) ວັນທີ 2 ກໍລະກົດ 2019, ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ໄດ້ມອບຕາໜ່າງເຫຼັກ ເພື່ອອ້ອມຮົ້ວຫ້ອງການບ້ານ ຈັດສັນ (ບ້ານຫ້ວຍດຳໃໝ່) ເມືອງທ່າແຕງ, ແຂວງເຊກອງ ລວມມູນຄ່າ 5.750.000 ກີບ.

4) ໃນວັນທີ 15 ສິງຫາ 2019, ຜ-ຟຟລ ຮ່ວມກັບ ບໍລິສັດ Gulf Energy Development Public Company Limited ຫຼື GED, ໄດ້ມອບອຸປະກອນການແພດ ແລະ ເຄື່ອງໃຊ້ຈຳເປັນ ເພື່ອປະກອບສ່ວນໃນຂະບວນການຊ່ວຍເຫຼືອຜູ້ທີ່ຕິດພະຍາດໄຂ້ຍຸງລາຍ.
5) ໃນລະຫວ່າງວັນທີ 09-11 ສິງຫາ 2019 ຜ-ຟຟລ ໄດ້ປະກອບສ່ວນດ້ານສະຖານທີ່ໃນການຈັດກິດຈະກຳແຄ້ມ ຂອງ ຄະນະຊາວໜຸ່ມລາວ ໂຄງການຊາວໜຸ່ມເດີນທະເລອາຊຽນ-ຍີ່ປຸ່ນ (SSEAYP) ຄັ້ງທີ 46 ປະຈຳປີ 2019 ທີ່ເຂື່ອນໄຟຟ້ານ້ຳມັງ 3.
6) ໃນວັນທີ 20 ສິງຫາ 2019 ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ຮ່ວມກັບກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງທ່າແຕງ ແຂວງເຊກອງລົງຕິດຕາມຄວາມຄືບໜ້າຂອງເຂື່ອນ, ການບໍລິຫານຈັດການນ້ຳ ແລະ ການປະຕິບັດຕາມພັນທະ CA ລວມເຖິງວຽກງານສິ່ງແວດລ້ອມ ແລະ ສັງຄົມ, ເພື່ອສະເໜີແຜນການຜະລິດ, ການບໍລິຫານການຈັດການນ້ຳ, ການປ້ອງກັນຮັບມືກັບໄພນ້ຳຖ້ວມ ແລະ ວຽກງານສິ່ງແວດລ້ອມ-ສັງຄົມທີ່ທາງເຂື່ອນໄດ້ປະຕິບັດໃນໄລຍະທີ່ຜ່ານມາ.
7) ໃນວັນທີ 27 ສິງຫາ ປີ 2019, ສະມາຊິກກຳມະບານໜ່ວຍ 12 ຂອງ ຜ-ຟຟລ ໄດ້ເຂົ້າຮ່ວມກິດຈະກຳປູກຕົ້ນໄມ້ທີ່ເຂື່ອນໄຟຟ້ານ້ຳງື່ມ 3, ເມືອງລ່ອງແຈ້ງ, ແຂວງໄຊສົມບູນ.
8) ໃນລະຫ່ວາງວັນທີ 6-7 ກັນຍາ 2019 ຕາງໜ້າ ຜ-ຟຟລ ແລະ ບໍລິສັດ VASE ຮ່ວມກັນເອົາເຄື່ອງອຸປະໂພກ ແລະ ບໍລິໂພກໄປຊ່ວຍເຫລືອຜູ້ປະສົບໄພນ້ຳຖ້ວມ ແຂວງພາກໃຕ້ ຂອງ ສປປ ລາວ.
9) ວັນທີ 6 ກັນຍາ 2019, ຕາງໜ້າໃຫ້ກັບ ຜ-ຟຟລ ແລະ ສະມາຄົມສົ່ງເສີມສຸຂະພາບຄອບຄົວ ໄດ້ມອບເຄື່ອງໃຫ້ຜີ່ນ້ອງ ເມືອງນານ ແຂວງຫຼວງພະບາງ ທີ່ປະສົບກັບໄພນ້ຳຖ້ວມ.
10) ວັນທີ 7 ພະຈິກ ປີ 2019 ອຳນວຍການເຂື່ອນໄຟຟ້ານ້ຳງື່ມ 1 ໄດ້ລົງປະຊາສຳພັນກ່ຽວກັບ ວຽກງານບໍລິຫານຈັດການນ້ຳໃນໄລຍະລະດູແລ້ງ ທີ່ສະໂມສອນສຶກສາເມືອງ ໄຊທານີ, ແຂວງ ນະຄອນຫຼວງວຽງຈັນ ເພື່ອເຜີຍແຜ່ໃຫ້ອຳນາດການປົກຄອງ, ບັນດາບ້ານ ທີ່ຂຶ້ນກັບເມືອງ ໄຊທານີ ຮັບຮູ້ກ່ຽວກັບສະພາບການປົກແຫ້ງຂອງສາຍນ້ຳງື່ມ ເມື່ອສົມທຽບໃສ່ຮອບຫຼາຍປີທີ່ຜ່ານມາ.
11) ຜ-ຟຟລ ແລະ ບໍລິສັດ ເທີນ-ຫີນບູນ ພາວເວີ ຈຳກັດ (THPC) ໄດ້ມອບເຂົ້າສານຈຳນວນ 20 ໂຕນ ແລະ ແນວພັນເຂົ້າຈຳນວນ 10 ໂຕນຕໍ່ແຂວງ ເພື່ອຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມຢູ່ແຂວງສາລະວັນ ແລະ ແຂວງເຊກອງ ລວມເປັນມູນຄ່າທັງໝົດຈຳນວນ 418 ລ້ານກີບ.

7. ການລົງທຶນ ແລະ ການພັດທະນາທຸລະກິດ

ໃນວັນທີ 23 ພຶດສະພາ 2019, TRIS RATING ຮັກສາເຊັດດິດບໍລິສັດ ແລະ ຮຸ້ນກູ້ບໍ່ດ້ອຍສິດ ບໍ່ມີຫລັກປະກັນ ຂອງ ບໍລິສັດ “EDL-GEN” ທີ່ລະດັບ “BBB+/NEGATIVE” ເຖິງຢ່າງໃດກໍຕາມ, ສືບເນື່ອງຈາກການປັບຫຼຸດອັນດັບເຊັດດິດ ຂອງ ສປປ ລາວ ໂດຍ TRIS RATING, ໃນ ວັນທີ 28 ມິຖຸນາ 2019 ເຮັດໃຫ້ການຈັດອັນດັບເຊັດດິດ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ໄດ້ຖືກປັບລົງເຊັ່ນກັນ ຈາກລະດັບ “BBB+/NAGATIVE” ມາເປັນ “BBB/STABLE”.

* **ການລົງທຶນຮ່ວມກັບນັກລົງທຶນພາຍນອກ.**

- ໃນວັນທີ 22 ມີນາ 2019, ໄດ້ລົງນາມສັນຍາຮ່ວມຮຸ້ນ ໃນການພັດທະນາໂຄງການກໍ່ສ້າງອາຄານ EDL-Gen Energy Complex Plaza.

* **ການລົງທຶນຮ່ວມກັບ ຜຟລ**

- ໄດ້ຮັບໂອນຮຸ້ນ ຂອງ ເຂື່ອນໄຟຟ້ານ້ຳມັງ 1 (10%), ເຂື່ອນໄຟຟ້າໄຊຍະບູລີ (20%), ເຂື່ອນໄຟຟ້ານ້ຳອູ 2,5,6 (15%), ຕາມຊັດສ່ວນ ຜຟລ ຖືຮຸ້ນ ແລະ ໄດ້ສຳເລັດການລົງນາມສັນຍາໂອນຮຸ້ນໂຄງການເຂື່ອນໄຟຟ້ານ້ຳທາ 1 ລະຫວ່າງ ຜຟລ ແລະ ຜ-ຜຟລ.
- ໄດ້ເຈລະຈາສັນຍາໂອນ ຊັບສິນໂຄງການເຂື່ອນໄຟຟ້ານ້ຳຄານ 3, ເຂື່ອນໄຟຟ້ານ້ຳຈຽນ ແລະ ເຂື່ອນໄຟຟ້າເຊເສັດ 3.
- ໄດ້ດຳເນີນການເຈລະຈາ ລາຄາຊື້ຂາຍໄຟຟ້າສຳລັບໂຄງການເຂື່ອນໄຟຟ້ານ້ຳງື່ມ 1 ພາກຂະຫຍາຍ (6-7-8).

8. ການລະດົມທຶນ:

ໃນວັນທີ 30 ມັງກອນ 2019 ຜ-ຜຟລ ໄດ້ອອກຮຸ້ນກູ້ສະກຸນເງິນບາດ (ບໍ່ມີຫລັກຄ້ຳປະກັນ) ທີ່ ປະເທດໄທ ເຊິ່ງສາມາດ ຂາຍໄດ້ 3.839,60 ລ້ານບາດ.

❖ ແຜນການດຳເນີນທຸລະກິດຂອງບໍລິສັດ 2020

1. ການຜະລິດ

ໃນປີ 2020 ຄາດວ່າ, ຜ-ຜຟລ ມີເຂື່ອນໄຟຟ້າທີ່ຂຶ້ນກັບທັງໝົດ 14 ແຫ່ງ ປະກອບມີ: ເຂື່ອນໄຟຟ້ານ້ຳງື່ມ 1, ເຂື່ອນໄຟຟ້ານ້ຳຄານ 2, ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່, ເຂື່ອນໄຟຟ້າເຊເສັດ 1-2, ເຂື່ອນໄຟຟ້ານ້ຳເລີກ, ເຂື່ອນໄຟຟ້ານ້ຳມັງ 3, ເຂື່ອນໄຟຟ້ານ້ຳສະນາ, ເຂື່ອນໄຟຟ້ານ້ຳຊອງ, ເຂື່ອນໄຟຟ້າແຊລະບ່ຳ, ເຂື່ອນໄຟຟ້ານ້ຳງື່ມ 1 ພາກຂະຫຍາຍ, ເຂື່ອນໄຟຟ້ານ້ຳຄານ 3, ເຂື່ອນໄຟຟ້ານ້ຳຈຽນ ແລະ ເຂື່ອນໄຟຟ້າເຊເສັດ 3. ລວມກຳລັງຕິດຕັ້ງ 886 MW. ຄາດວ່າຈະສາມາດຜະລິດກະແສໄຟຟ້າໄດ້ 3.244,60 GWh.

ການຜະລິດຈາກ 16 ເຂື່ອນ ຜູ້ຜະລິດໄຟຟ້າເອກະລາດ ຊຶ່ງປະກອບມີເຂື່ອນໄຟຟ້າເທີນຫິນບູນ, ເຂື່ອນໄຟຟ້ານ້ຳງື່ມ-2, ເຂື່ອນໄຟຟ້າຫ້ວຍເຫາະ, ເຂື່ອນໄຟຟ້ານ້ຳງື່ມ 5, ເຂື່ອນໄຟຟ້ານ້ຳລີກ 1-2, ເຂື່ອນໄຟຟ້ານ້ຳແບ່ງ, ເຂື່ອນໄຟຟ້າດອນສະໂຮງ, ເຂື່ອນໄຟຟ້ານ້ຳລີກ 1, ເຂື່ອນໄຟຟ້ານ້ຳລອງ, ເຂື່ອນໄຟຟ້ານ້ຳທາ 1, ເຂື່ອນໄຟຟ້ານ້ຳມັງ 1, ເຂື່ອນໄຟຟ້ານ້ຳອູ 2, 5, 6, ເຂື່ອນໄຟຟ້ານ້ຳງຽບ 2 ແລະ ເຂື່ອນໄຟຟ້ານ້ຳຂອງໄຊຍະບູລີ. ລວມກຳລັງຕິດຕັ້ງຕາມຊັດສ່ວນການຖືຮຸ້ນຢູ່ 1.010 MW. ຄາດວ່າຈະສາມາດຜະລິດກະແສໄຟຟ້າໄດ້ 4.826,91 GWh (ຕາມສັດສ່ວນການຖືຮຸ້ນ).

ການຜະລິດຈາກບໍລິສັດ ອີດີເອ-ເຈນ ໂຊລ່າ ພາວເວີ້ ຈຳກັດ ທີ່ ຜ-ຜຟລ ລວມກຳລັງການຕິດຕັ້ງຕາມສັດສ່ວນການຖືຮຸ້ນເທົ່າກັບ 19,2 MW, ຄາດວ່າຈະມີຕົວເລກການຜະລິດຢູ່ 29,59 GWh.

ດັ່ງນັ້ນ, ຄາດວ່າການຜະລິດທັງໝົດໃນປີ 2020 ຈະໄດ້ເທົ່າກັບ 8.101,10 GWh.

2. ການຈຳໜ່າຍ

ການຈຳໜ່າຍກະແສໄຟຟ້າໃນປີ 2020, ໂດຍສະເພາະໃນບັນດາເຂື່ອນທີ່ຢູ່ໃນການຄຸ້ມຄອງ ຂອງ ຜ-ຜຟລ, ຄາດວ່າຈະມີປະມານເທົ່າກັບ 3.194,21 GWh ແລະ ການຈຳໜ່າຍຈາກ 16 ເຂື່ອນ ຜູ້ຜະລິດໄຟຟ້າເອກະລາດ, ຄາດວ່າແຜນການຈຳໜ່າຍຢູ່ 4.826,91 GWh ຕາມຊັດສ່ວນການຖືຮຸ້ນ ຂອງ ຜ-ຜຟລ ແລະ ການຈຳໜ່າຍຈາກ ບໍລິສັດ ອີດີເອ-ເຈັນ ໂຊລ່າ ພາວເວີ້ ຈຳກັດ ຄາດວ່າຈະມີຕົວເລກຢູ່ 29,59 GWh ຕາມສັດສ່ວນການຖືຮຸ້ນ ຂອງ ຜ-ຜຟລ.

ດັ່ງນັ້ນ, ໃນປີ 2020 ນີ້, ຄາດວ່າຈະມີຕົວເລກການຈຳໜ່າຍກະແສໄຟຟ້າຈາກບັນດາເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ ແລະ ບັນດາເຂື່ອນໄຟຟ້າຜູ້ຜະລິດໄຟຟ້າເອກະລາດ ທີ່ ຜ-ຟຟລ ເຂົ້າໄປຖືຮຸ້ນ, ທັງໝົດ 8.050,71 GWh.

3. ການລົງທຶນເຂົ້າໃນການຂະຫຍາຍກຳລັງຕິດຕັ້ງ

ໃນປີ 2020, ຜ-ຟຟລ ຈະສືບຕໍ່ລົງທຶນໃນເຂື່ອນຕ່າງໆ ໂດຍສະເພາະບັນດາເຂື່ອນທີ່ໄດ້ລະບຸໄວ້ໜັງສືຊວນຊື້ ຂອງ ຜ-ຟຟລ, ລວມທັງເຂື່ອນໃໝ່ອື່ນໆເຊັ່ນ:

- **ຮຸ້ນໃນໂຄງການເຂື່ອນ IPPs ທີ່ລົງທຶນໂດຍກົງ.**
  1. ເຂື່ອນໄຟຟ້ານ້ຳພູນ ກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 51% 23 MW.
  2. ເຂື່ອນໄຟຟ້ານ້ຳບີ 1, 2 ແລະ 3 ກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 80% 108 MW.
  3. ເຂື່ອນໄຟຟ້າຫ້ວຍລຳພັນຕອນລຸ່ມ ກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 60% 9 MW.
  4. ເຂື່ອນໄຟຟ້ານ້ຳດິກ 1, 2 & 3 ກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 70% 28 MW.
- **ໂຄງການທີ່ລົງທຶນໃນບໍລິສັດລູກ.**
  1. ໂຮງໄຟຟ້າພະລັງງານແສງອາທິດ ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 60% 29,4 MW.
- **ໂຄງການພາກຂະຫຍາຍ.**
  1. ເຂື່ອນໄຟຟ້າພາກຂະຫຍາຍແຊລະບຳ ກຳລັງຕິດຕັ້ງ 8 MW.
  2. ເຂື່ອນໄຟຟ້າພາກຂະຫຍາຍເຊເສັດ 2 ກຳລັງຕິດຕັ້ງ 10 MW.

4. ການມອບພັນທະໃຫ້ລັດ

ຜ-ຟຟລ ໄດ້ມອບພັນທະໃຫ້ລັດປະກອບດ້ວຍ ຄ່າພາກຫຼວງ 1% ຂອງລາຍຮັບຈາກການຈຳໜ່າຍກະແສໄຟຟ້າ, ອາກອນລາຍໄດ້ຈາກເງິນປັນຜົນ 10%, ອາກອນມູນຄ່າເພີ້ມ 10% ແລະ ອາກອນລາຍໄດ້ຂອງບຸກຄົນ.

5. ການພັດທະນາຊັບພະຍາກອນມະນຸດ

ໂດຍແນ່ໃສ່ການສ້າງພະນັກງານ ຜ-ຟຟລ ໃຫ້ເປັນພະນັກງານມືອາຊີບ, ສາມາດປະຕິບັດວຽກງານໄດ້ຢ່າງຄ່ອງຕົວ ແລະ ມີປະສິດທິພາບສູງ, ຜ-ຟຟລ ຈຶ່ງໄດ້ວາງງົບປະມານຈຳນວນ 2.08 ຕື້ກີບ ໃນການຝຶກອົບຮົມພະນັກງານດ້ານເຕັກນິກ ແລະ ການຄຸ້ມຄອງ ເພື່ອຍົກສູງຄຸນນະພາບແລະປະສິດທິພາບ ຂອງບຸກຄະລາກອນໃນທົ່ວ ຜ-ຟຟລ ເພື່ອໃຫ້ສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການການດຳເນີນທຸລະກິດໃນອະນາຄົດ, ບໍລິສັດໄດ້ເອົາໃຈໃສ່ວາງແຜນໄລຍະສັ້ນ ແລະ ໄລຍະຍາວ ເພື່ອຍົກລະດັບ ຄວາມຮູ້ຄວາມສາມາດໃຫ້ແກ່ພະນັກງານກຳມະກອນຢ່າງເປັນລະບົບ, ໂດຍສະເພາະຄວາມຮູ້ພື້ນຖານໃນການປະຕິບັດລະບຽບການ, ການຍົກສູງວິຊາສະເພາະທາງດ້ານເຕັກນິກວິຊາການ, ບົດຮຽນທາງດ້ານການດຳເນີນທຸລະກິດການເງິນ ແລະ ບັນດາຂໍ້ກຳນົດກົດລະບຽບຂອງວຽກງານຕະຫລາດຫລັກຊັບ. ແຜນພັດທະນາບຸກຄະລາກອນຂອງ ຜ-ຟຟລ ໄດ້ກວມເອົາດ້ານການບໍລິຫານ, ດ້ານການເງິນ ແລະ ເຕັກນິກວິຊາການຕ່າງໆ ໂດຍມີແຜນຈັດສົ່ງເຂົ້າຝຶກອົບຮົມທີ່ສູນຝຶກ ຟຟລ, ສູນຝຶກ ແລະ ສະຖາບັນການສຶກສາພາຍໃນປະເທດ ແລະ ຕ່າງປະເທດ ແລະ ແລກປ່ຽນປະສົບການທາງດ້ານເຕັກນິກວິຊາການກັບ ກຟຜ ແລະ ກຟພ. ນອກຈາກນີ້, ຍັງມີແຜນການແລກປ່ຽນປະສົບການທາງດ້ານເຕັກນິກວິຊາການລະຫວ່າງເຂື່ອນຕ່າງໆພາຍໃນປະເທດອີກດ້ວຍ.

6. ວຽກງານສິ່ງແວດລ້ອມ ແລະ ສັງຄົມ.

ເພື່ອເປັນການພັດທະນາໃຫ້ມີຄວາມຍືນຍົງ ຂອງ ຜ-ຟຟລ ຕໍ່ກັບສັງຄົມອ້ອມຂ້າງ ແລະ ທຳມະຊາດແວດລ້ອມຢູ່ທີ່ບໍລິເວນເຂື່ອນ, ໃນປີ 2020 ຜ-ຟຟລ ໄດ້ວາງງົບປະມານຈຳນວນ 4,76 ຕື້ກີບ ຊຶ່ງໃນນີ້ໄດ້ແບ່ງອອກເປັນ 2 ພາກສ່ວນຄື: ພາກສ່ວນທີ 1 ເປັນພັນທະຕາມສັນຍາສຳປະທານທີ່ ຜ-ຟຟລ ຕ້ອງໄດ້ປະຕິບັດໃນການບຳລຸງຮັກສາອ່າງໂຕ່ງ, ພາກສ່ວນທີ 2 ເປັນການປະກອບສ່ວນຕໍ່ສັງຄົມ ແລະ ຊຸມຊົນອ້ອມຂ້າງເຂື່ອນໂດຍໃຫ້ມີລັກສະນະເປັນການຊຸກຍູ້ທີ່ມີການປະກອບສ່ວນຂອງປະຊາຊົນ ເຊິ່ງວຽກງານສ່ວນໃຫຍ່ແມ່ນ:

1. ໂຄງການກໍ່ສ້າງ ແລະ ສ້ອມແປງ ນ້ຳສະອາດ ບ້ານ ຫ້ວຍດຳໃໝ່,ບ້ານສະຫົວໃຕ້
2. ສ້າງແຜນຄຸ້ມຄອງປ່າໄມ້ (ກົມປ່າໄມ້)
3. ຊື້ເບຍໄມ້ມາປູກຢູ່ອ້ອມຂ້າງບໍລິເວນຫ້ອງການ ແລະ ບ້ານພັກ
4. ສ້ອມແປງໂຮງຮຽນມັດທະຍົມຕົ້ນ ບ້ານພໍ່ເຂັມ
5. ການປູກຈິດສຳນຶກທາງດ້ານສິ່ງແວດລ້ອມໃຫ້ແກ່ຊຸມຊົນອ້ອມຂ້າງບັນດາເຂື່ອນ ຜ-ຟຟລ
6. ພັນທະປົກປັກຮັກສາປ່າສະຫງວນພູເຂົາຄວາຍ-ພູພະນັງ (ເຂື່ອນໄຟຟ້ານ້ຳມັງ 3 ແລະ ນ້ຳເລີກ) ແລະ ໂຄງການອື່ນໆ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປີ 2019 ລວມທັງລາຍງານການເງິນຂອງບໍລິສັດ ປີ 2019 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດປີ 2020.

<u>ຄະແນນສຽງທີ່ຕ້ອງໃຊ້:</u>

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2019.

<u>ລາຍລະອຽດ:</u>

ອີງຕາມກົດລະບຽບຂອງບໍລິສັດ, ບໍລິສັດມີນະໂຍບາຍໃນການແບ່ງເງິນປັນຜົນໃນອັດຕາສ່ວນບໍ່ໜ້ອຍ 50 ສ່ວນຮ້ອຍຂອງກຳໄລສຸດທິ, ພາຍຫລັງຫັກສ້າງເປັນຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງອື່ນໆ (ຖ້າມີ) ໃນແຕ່ລະປີ, ຊຶ່ງການແບ່ງເງິນປັນຜົນຈະຂຶ້ນຢູ່ກັບສະພາບເສດຖະກິດ ແລະແຜນການລົງທຶນຕ່າງໆໃນອະນາຄົດ.

ບໍລິສັດມີກຳໄລສຸດທິຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2019 ເປັນຈຳນວນທັງໝົດ 207,55 ຕື້ກີບ. ສະເໜີກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ 6 ເດືອນທ້າຍປີ 2019 ພາຍຫຼັງການຫັກເປັນຄັງສຳຮອງຕາມລະບຽບການ, ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ 28 ພຶດສະພາ 2020 ໃນອັດຕາຮຸ້ນລະ 100 ກີບ, ລວມເປັນເງິນປັນຜົນຈ່າຍທັງໝົດ 167,93 ຕື້ກີບ ແລະ ກຳນົດຈ່າຍເງິນປັນຜົນໃນວັນທີ 26 ມິຖຸນາ 2020.

ຄຳເຫັນຂອງສະພາບໍລິຫານ:

ການສະເໜີຈ່າຍເງິນປັນຜົນຂອງບໍລິສັດ ແມ່ນຖືກປະຕິບັດຕາມນະໂຍບາຍການຈ່າຍເງິນປັນຜົນຂອງ ບໍລິສັດ ແລະ ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາອະນຸມັດການ ຈ່າຍເງິນປັນຜົນດັ່ງກ່າວ.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຫລາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6. ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ ກວດສອບບັນຊີພາຍນອກ ປີ 2020-2022.

ລາຍລະອຽດ:

ໂດຍອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ມາດຕາ 149 ວ່າດ້ວຍສິດ ແລະ ໜ້າທີ່ຂອງກອງປະຊຸມ ສາມັນຜູ້ຖືຮຸ້ນ.

ບໍລິສັດສະເໜີແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ PricewaterhouseCoopers (Lao) Co., Ltd. (PWC) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດສຳລັບປີ 2020-2022, ເນື່ອງຈາກວ່າບໍລິສັດດັ່ງກ່າວ ຊະນະການປະມູນ ໂດຍມີຄ່າຈ້າງ ຂອງຜູ້ກວດສອບບັນຊີສຳລັບບັນຊີປີ 2020 ເປັນຈຳນວນເງິນບໍ່ເກີນ 701.215.000 ກີບ, ປີ 2021 ເປັນຈຳນວນເງິນບໍ່ເກີນ 722.500.000 ກີບ ແລະ ປີ 2022 ເປັນຈຳນວນເງິນບໍ່ເກີນ 744.049.000 ກີບ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນອະນຸມັດການແຕ່ງຕັ້ງຜູ້ ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກດັ່ງກ່າວ.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຫລາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 7. ພິຈາລະນາ ແລະ ອະນຸມັດເປ່ຍປະຊຸມສະພາບໍລິຫານ, ກອງເລຂາສະພາບໍລິຫານ, ແລະ ແຂກທີ່ຖືກເຊີນ ເຂົ້າຮ່ວມກອງປະຊຸມສະພາບໍລິຫານ.

ລາຍລະອຽດ:

ໂດຍອີງຕາມສະພາບຜົນການດຳເນີນທຸລະກິດ ແລະ ທິດທາງມາດຕະການປະຢັດມັດທະຍັດ ຂອງ ບໍລິສັດ. ດັ່ງນັ້ນ, ສະເໜີອະນຸມັດເປ່ຍປະຊຸມຂອງສະພາບໍລິຫານ, ກອງເລຂາສະພາບໍລິຫານ ແລະ ແຂກທີ່ຖືກເຊີນເຂົ້າ ຮ່ວມກອງປະຊຸມສະພາບໍລິຫານ ໂດຍຫລຸດຕ່ຳຄຸນຈາກ 2 ເດືອນ ເປັນ 1.5 ເດືອນ, ຊຶ່ງມີລາຍລະອຽດດັ່ງນີ້:

1) ປະທານສະພາບໍລິຫານເທົ່າກັບ 100 ສ່ວນຮ້ອຍ ຂອງເງິນເດືອນຜູ້ອຳນວຍການໃຫຍ່ 1.5 ເດືອນ (ກ່ອນຫັກອາກອນ)/ຄັ້ງ;
2) ຮອງປະທານສະພາບໍລິຫານເທົ່າກັບ 75 ສ່ວນຮ້ອຍ ຂອງເງິນເດືອນຜູ້ອຳນວຍການໃຫຍ່ 1.5 ເດືອນ (ກ່ອນຫັກອາກອນ)/ຄັ້ງ;

3) ກຳມະການສະພາບໍລິຫານເທົ່າກັບ 50 ສ່ວນຮ້ອຍ ຂອງເງິນເດືອນຜູ້ອຳນວຍການໃຫຍ່ 1.5 ເດືອນ (ກ່ອນຫັກອາກອນ) /ຄັ້ງ;

4) ກອງເລຂາສະພາບໍລິຫານ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມກອງປະຊຸມສະພາບໍລິຫານເທົ່າກັບ 80 ສ່ວນຮ້ອຍ ຂອງເງິນເບ້ຍປະຊຸມກຳມະການສະພາບໍລິຫານ/ຄັ້ງ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນອະນຸມັດເບ້ຍປະຊຸມສະພາບໍລິຫານ, ກອງເລຂາສະພາບໍລິຫານ, ແລະ ແຂກທີ່ຖືກເຊີນເຂົ້າຮ່ວມກອງປະຊຸມສະພາບໍລິຫານ.

<u>ຄະແນນສຽງທີ່ຕ້ອງໃຊ້:</u>

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຫລາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 8. ພິຈາລະນາ ແລະ ຮັບຮອງເອົາສະພາບໍລິຫານຊຸດໃໝ່ ເພື່ອປ່ຽນແທນສະພາບໍລິຫານຊຸດເກົ່າທີ່ຄົບອາຍຸການ.

<u>ລາຍລະອຽດ:</u>

ອີງຕາມບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ສະບັບລົງວັນທີ 20 ເມສາ 2018 ວາລະທີ 7, ວັກທີ 3 ໄດ້ລະບຸໄວ້ວ່າ ອາຍຸການຂອງບັນດາສະພາບໍລິຫານຂອງບໍລິສັດທັງໝົດ ມີກຳນົດ 2 ປີ ໂດຍເລີ່ມນັບແຕ່ວັນທີກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2017 ເປັນຕົ້ນໄປ. ຊຶ່ງມາຮອດປັດຈຸບັນ ເຫັນວ່າອາຍຸການຂອງບັນດາສະພາບໍລິຫານໄດ້ປະຕິບັດວຽກງານຄົບວາລະ 02 ປີແລ້ວ.

ຄະນະກຳມະການຄັດເລືອກໄດ້ຄົ້ນຄວ້າເອົາບຸກຄະລາກອນຈາກຫຼາຍພາກສ່ວນທີ່ມີຄຸນວຸດທິການສຶກສາສູງ, ມີຄວາມຮູ້ຄວາມສາມາດ, ມີປະສົບການໃນການດຳເນີນທຸລະກິດ ແລະ ການປະຕິບັດວຽກງານ ເພື່ອປ່ຽນແທນສະພາບໍລິຫານຊຸດເກົ່າທີ່ຄົບວາລະແລ້ວ, ໂດຍເລີ່ມຕັ້ງແຕ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ເປັນຕົ້ນໄປ (ກຳນົດ 02 ປີ). ຊີວະປະຫວັດຫຍໍ້ຂອງບັນດາສະພາບໍລິຫານແຕ່ລະທ່ານໄດ້ມີລາຍລະອຽດໃນເອກະສານຄັດຕິດ ທີ່ໄດ້ຄັດຕິດພ້ອມກັບໜັງສືເຈ້ງເຊີນ.

ຄະນະສະພາບໍລິຫານຊຸດໃໝ່ ມີລາຍຊື່ດັ່ງນີ້:

1.	ທ່ານ ປອ. ຄຳມະນີ ອິນທິລາດ	ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ປະທານສະພາບໍລິຫານ
2.	ທ່ານ ບຸນອູ້ມ ສີວັນເພັງ	ຜູ້ອຳນວຍການໃຫຍ່ ຟຟລ, ເປັນຮອງປະທານສະພາບໍລິຫານ
3.	ທ່ານ ນາງ ລັດຕະນາ ປະທຸມວັນ	ຜູ້ອຳນວຍການໃຫຍ່ ຜ-ຟຟລ, ເປັນກຳມະການສະພາບໍລິຫານ
4.	ທ່ານ ຄຳເພັງ ທິນນະກອນ	ຮອງຫົວໜ້າກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ ກະຊວງການເງິນ, ເປັນກຳມະການສະພາບໍລິຫານ
5.	ທ່ານ ສົມພິດ ແກ້ວວິຈິດ	ຫົວໜ້າກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່, ເປັນກຳມະການສະພາບໍລິຫານ
6.	ທ່ານ ໂກມົນຈິນ ເພັດອາສາ	ຮອງຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ, ເປັນກຳມະການສະພາບໍລິຫານ

7. ທ່ານ ຄຳແກ້ວ ວິສິສົມບັດ — ວ່າການຫົວໜ້າກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ, ເປັນກຳມະການອິດສະຫຼະ
8. ທ່ານ ນາງ ທະວີຈັນ ທ່ຽງເທບວົງສາ — ຮອງຫົວໜ້າກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ, ເປັນກຳມະການອິດສະຫຼະ
9. ທ່ານ ຮສ. ປອ ພູເພັດ ກ້ຽວພິລາວົງ — ຮອງຄະນະບໍດີ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ, ເປັນກຳມະການອິດສະຫຼະ

ສະເໜີກຳນົດລາຍຊື່ຜູ້ອຳນວຍການ ທີ່ມີອຳນາດລົງລາຍເຊັນຜູກພັນບໍລິສັດ ດັ່ງນີ້:

1. ປະທານສະພາບໍລິຫານ ຫລື ຮອງປະທານສະພາບໍລິຫານ ຫລື ຜູ້ອຳນວຍການໃຫຍ່ ເປັນຜູ້ລົງລາຍເຊັນ ແລະ ປະທັບກາບໍລິສັດແຕ່ພຽງຜູ້ດຽວ; ຫລື
2. ໃຫ້ຜູ້ອຳນວຍການອື່ນສອງທ່ານ ລົງລາຍເຊັນຮ່ວມກັນ ແລະ ປະທັບກາບໍລິສັດ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງເອົາສະພາບໍລິຫານຊຸດໃໝ່ ຂອງບໍລິສັດ ລວມທັງການມອບອຳນາດດັ່ງກ່າວ.

<u>ຄະແນນສຽງທີ່ຕ້ອງໃຊ້:</u>

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຫລາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 9. ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບບໍລິສັດ ມາດຕາ 4 ວ່າດ້ວຍທີ່ຕັ້ງສຳນັກງານໃຫຍ່ ແລະ ສາຂາ, ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ

<u>ລາຍລະອຽດ:</u>

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຂອງບໍລິສັດສອດຄ່ອງກັບແກ້ໄຂປ່ຽນແປງທີ່ຕັ້ງສຳນັກງານໃຫຍ່ ແລະ ສາຂາ ຂອງບໍລິສັດ ແລະ ການປ່ຽນຊື່ ລວມທັງຂໍ້ມູນ ຂອງສະພາບໍລິຫານ. ບໍລິສັດຈຶ່ງໄດ້ສະເໜີດັດແກ້ກົດລະບຽບບໍລິສັດມາດຕາ 4 ວ່າດ້ວຍທີ່ຕັ້ງສຳນັກງານໃຫຍ່ ແລະ ສາຂາ, ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ ດັ່ງນີ້:

1) <u>ດັດແກ້ມາດຕາ 4. ທີ່ຕັ້ງສຳນັກງານໃຫຍ່ ແລະ ສາຂາ:</u> ໂດຍເພີ່ມ ເຂື່ອນໄຟຟ້າເຊເສັດ 3, ເຂື່ອນໄຟຟ້ານ້ຳຄານ 3 ແລະ ເຂື່ອນໄຟຟ້ານ້ຳຈຽນ, ເນື່ອງຈາກວ່າ ຜ-ຟຟລ ໄດ້ສຳເລັດການໂອນເຂື່ອນຈາກລັດວິສາຫະກິດໄຟຟ້າລາວ ມີລາຍລະອຽດດັ່ງນີ້:

1. ເຂື່ອນໄຟຟ້າເຊເສັດ 3:

   ສະຖານທີ່ຕັ້ງຢູ່ ບ້ານພໍ່ເຂັມ, ເມືອງເລົ່າງາມ, ແຂວງສາລະວັນ;

   ໂທລະສັບ: 020 97409206

2. ເຂື່ອນໄຟຟ້ານ້ຳຄານ 3 :

   ສະຖານທີ່ຕັ້ງຢູ່ ບ້ານດອຍຫວາຍ, ເມືອງຊຽງເງິນ, ແຂວງຫຼວງພະບາງ;

   ໂທລະສັບ: 030 9244399

3. ເຂື່ອນໄຟຟ້ານ້ຳຈຽນ:
ສະຖານທີ່ຕັ້ງຢູ່ ບ້ານຊຳກ້ຳທອງ, ເມືອງທ່າໂທມ, ແຂວງໄຊສົມບູນ;
ໂທລະສັບ: 030 2275467

2) **<u>ດັດແກ້ມາດຕາ 9 ຜູ້ອຳນວຍການ:</u>** ປ່ຽນຊື່ ແລະ ຂໍ້ມູນຂອງສະພາບໍລິຫານຊຸດໃໝ່ ເພື່ອປ່ຽນແທນສະພາບໍລິຫານຊຸດເກົ່າທີ່ຄົບວາລະຄື:

ຜູ້ອຳນວຍການ ບໍລິສັດ ຜະລິດ - ໄຟຟ້າລາວ ມະຫາຊົນ ມີ 09 ທ່ານ, ປະກອບດ້ວຍ:

ກ. ຜູ້ຖືຮຸ້ນເປັນຜູ້ອຳນວຍການ:

1. ຊື່ ແລະ ນາມສະກຸນ: ທ່ານ ປອ. ຄຳມະນີ ອິນທິລາດ
- ສັນຊາດ: ລາວ;
- ທີ່ຢູ່ປະຈຸບັນ: ເຮືອນເລກທີ 401, ໜ່ວຍ 29, ບ້ານ ດອນກອຍ, ເມືອງ ສີສັດຕະນາກ, ແຂວງ ນະຄອນຫຼວງວຽງຈັນ.

2. ຊື່ ແລະ ນາມສະກຸນ: ທ່ານ ບຸນອູ້ມ ສີວັນເພັ່ງ
- ສັນຊາດ: ລາວ;
- ທີ່ຢູ່ປະຈຸບັນ: ເຮືອນເລກທີ 093, ໜ່ວຍ 10, ບ້ານ ກາງ, ເມືອງ ຫາດຊາຍຟອງ, ແຂວງ ນະຄອນຫຼວງວຽງຈັນ.

3. ຊື່ ແລະ ນາມສະກຸນ: ທ່ານ ນາງ ລັດຕະນາ ປະທຸມວັນ
- ສັນຊາດ: ລາວ;
- ທີ່ຢູ່ປະຈຸບັນ: ເຮືອນເລກທີ 958, ໜ່ວຍ 36, ບ້ານ ພະຂາວ, ເມືອງ ໄຊທານີ, ແຂວງ ນະຄອນຫຼວງວຽງຈັນ.

4. ຊື່ ແລະ ນາມສະກຸນ: ທ່ານ ຄຳເພັ່ງ ທິນນະກອນ
- ສັນຊາດ: ລາວ;
- ທີ່ຢູ່ປະຈຸບັນ: ເຮືອນເລກທີ 517, ໜ່ວຍ 42, ບ້ານ ສີວິໄລ, ເມືອງ ໄຊທານີ, ແຂວງ ນະຄອນຫຼວງວຽງຈັນ.

5. ຊື່ ແລະ ນາມສະກຸນ: ທ່ານ ໂກມິນຈັນ ເພັດອາສາ
- ສັນຊາດ: ລາວ;
- ທີ່ຢູ່ປະຈຸບັນ: ເຮືອນເລກທີ 246, ໜ່ວຍ 22, ບ້ານໂພນສະຫວາດເໜືອ, ເມືອງສີໂຄດຕະບອງ ແຂວງ ນະຄອນຫຼວງວຽງຈັນ.

ຂ. ຈ້າງບຸກຄົນພາຍນອກເປັນຜູ້ອຳນວຍການ (ຖ້າມີ):

ຜູ້ອຳນວຍການທີໜຶ່ງ:

6. ຊື່ ແລະ ນາມສະກຸນ: ທ່ານ ສົມພິດ ແກ້ວວິຈິດ
- ສັນຊາດ: ລາວ;
- ທີ່ຢູ່ປະຈຸບັນ: ເຮືອນເລກທີ 161, ໜ່ວຍ 12, ບ້ານ ໂພນສະຫວາດໃຕ້, ເມືອງ ສີໂຄດຕະບອງ ແຂວງ ນະຄອນຫຼວງວຽງຈັນ.

ຜູ້ອຳນວຍການທີສອງ (ອົດສະຫຼະ)

7. ຊື່ ແລະ ນາມສະກຸນ: ທ່ານ ຄຳແກ້ວ ວິສີສົມບັດ
- ສັນຊາດ: ລາວ;
- ທີ່ຢູ່ປະຈຸບັນ: ເຮືອນເລກທີ 015, ໜ່ວຍ 02, ບ້ານ ໂພນໄຊ, ເມືອງ ໄຊເສດຖາ ແຂວງ ນະຄອນຫຼວງວຽງຈັນ.

ຜູ້ອຳນວຍການທີສາມ (ອິດສະຫຼະ)

8. ຊື່ ແລະ ນາມສະກຸນ: ທ່ານ ນາງ ທະວີຈັນ ທ່ຽງເທບວົງສາ
- ສັນຊາດ: ລາວ;
- ທີ່ຢູ່ປະຈຸບັນ: ເຮືອນເລກທີ 23/8, ໜ່ວຍ 04, ບ້ານ ຫາຍໂສກ, ເມືອງ ຈັນທະບູລີ ແຂວງ ນະຄອນຫຼວງວຽງຈັນ.

ຜູ້ອຳນວຍການທີສີ່ (ອິດສະຫຼະ)

9. ຊື່ ແລະ ນາມສະກຸນ: ທ່ານ ຮສ. ປອ ພູເພັດ ກ້ຽວພິລາວົງ
- ສັນຊາດ: ລາວ;
- ທີ່ຢູ່ປະຈຸບັນ: ເຮືອນເລກທີ 488, ໜ່ວຍ 03, ບ້ານ ສອນມອນ, ເມືອງ ສີສັດຕະນາກ ແຂວງ ນະຄອນຫຼວງວຽງຈັນ.

3) **<u>ດັດແກ້ມາດຕາ 12 ວ່າດ້ວຍສະພາບໍລິຫານ:</u>** ຂໍ້ມູນຂອງສະພາບໍລິຫານຊຸດໃໝ່ຄື:

1. ປະທານສະພາບໍລິຫານ ຊື່ ແລະ ນາມສະກຸນ: ທ່ານ ປອ. ຄຳມະນີ ອິນທິລາດ
2. ຮອງປະທານສະພາບໍລິຫານ ຊື່ ແລະ ນາມສະກຸນ: ທ່ານ ບຸນອູ້ມ ສີວັນເພັ້ງ

ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ໃນເລື່ອງດັ່ງກ່າວຂ້າງເທິງ ລວມທັງມີອຳນາດດັດແກ້ເນື້ອໃນກົດລະບຽບຂອງບໍລິສັດຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວມີຄຳແນະນຳ ແລະ/ຫຼືຄຳສັ່ງໃຫ້ດັດແກ້.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນອະນຸມັດການດັດແກ້ກົດລະບຽບບໍລິສັດ ລວມທັງການມອບອຳນາດດັ່ງກ່າວ.

<u>ຄະແນນສຽງທີ່ຕ້ອງໃຊ້:</u>

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນ ຫລື ຜູ້ຕາງໜ້າຜູ້ຖືຮຸ້ນຢ່າງໜ້ອຍ ສອງສ່ວນສາມ (2/3) ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະມີຮຸ້ນລວມກັນຢ່າງໜ້ອຍ 80 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018, ວັນທີ 09 ເມສາ 2019

ນະຄອນຫຼວງວຽງຈັນ, ວັນທີ 23/04/2019

ບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ປະຊຸມເມື່ອວັນທີ 09 ເມສາ 2019 ເວລາ 15:00 ໂມງ ທີ່ຫ້ອງປະຊຸມໃຫຍ່ຊັ້ນ 1, ສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂດຍ ທ່ານ ບຸນອຸ້ມ ສີວັນເພັ່ງ ຮອງປະທານສະພາບໍລິຫານ ເປັນປະທານກອງປະຊຸມ; ເນື່ອງຈາກ ທ່ານ ປອ. ຄຳມະນີ ອິນທິລາດ ປະທານສະພາບໍລິຫານ ບໍລິສັດ ຕິດພາລະກິດ ບໍ່ສາມາດເຂົ້າຮ່ວມໄດ້, ຈຶ່ງມອບສິດໃຫ້ແກ່ ທ່ານຮອງປະທານສະພາບໍລິຫານດຳເນີນການເປັນປະທານກອງປະຊຸມແທນ. ກອງປະຊຸມມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມດ້ວຍຕົນເອງຈຳນວນ 138 ທ່ານ ແລະ ມອບສັນທະຈຳນວນ 228 ທ່ານ, ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 366 ທ່ານ ຖືຮຸ້ນລວມກັນທັງໝົດ 1.517.525.005 ຮຸ້ນ ເທົ່າກັບ 90,37 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງ ບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການ ຂອງ ບໍລິສັດ.

ປະທານກອງປະຊຸມ ໄດ້ແນະນຳສະມາຊິກສະພາບໍລິຫານແຕ່ລະທ່ານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງທີ່ເຂົ້າຮ່ວມປະຊຸມ ດັ່ງນີ້:

1. **ທ່ານ ບຸນອຸ້ມ ສີວັນເພັ່ງ**	ຕຳແໜ່ງ:	ຮອງປະທານສະພາບໍລິຫານບໍລິສັດ/ຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ;
2. **ທ່ານ ນາງ ລັດຕະນາ ປະທຸມວັນ**	ຕຳແໜ່ງ:	ກຳມະການສະພາບໍລິຫານ/ຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ;
3. **ທ່ານ ບຸນມາ ມະນີວົງ**	ຕຳແໜ່ງ:	ກຳມະການສະພາບໍລິຫານ;
4. **ທ່ານ ນາງ ວານິດາ ສະຫວັດດີ**	ຕຳແໜ່ງ:	ກຳມະການສະພາບໍລິຫານ / ຮອງຫົວໜ້າກົມຄຸ້ມຄອງການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ, ກະຊວງການເງິນ;
5. **ທ່ານ ສີຈາດ ບຸດຊາກິດຕິລາດ**	ຕຳແໜ່ງ:	ກຳມະການສະພາບໍລິຫານ / ຫົວໜ້າກົມຄຸ້ມຄອງພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່;
6. **ທ່ານ ຣສ. ປອ. ກອງສີ ແສງມະນີ**	ຕຳແໜ່ງ:	ກຳມະການອິດສະຫຼະ/ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ;

7. **ທ່ານ ສຈ. ປອ. ຄຳລືຊາ ນອນສະຫວັນ** ຕຳແໜ່ງ: ກຳມະການອິດສະຫຼະ/ຫົວໜ້າກົມກິດຈະການນັກສຶກສາ, ກະຊວງສຶກສາທິການ ແລະ ກິລາ;

8. **ທ່ານ ຣສ. ຄຳເຜີຍ ພົມມະຈັນ** ຕຳແໜ່ງ: ກຳມະການອິດສະຫຼະ/ຫົວໜ້າຫ້ອງການແຜນການການເງິນ, ມະຫາວິທະຍາໄລແຫ່ງຊາດ;

ອົງປະຊຸມ ມີ 8 ທ່ານ, ຂາດປະຊຸມ 1 ທ່ານ ເນື່ອງຈາກຕິດພາລະກິດ ບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້ ຄື: ທ່ານ ປອ. ຄຳມະນີ ອິນທິລາດ ປະທານສະພາບໍລິຫານ, ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່.

ພ້ອມດຽວກັນນີ້, ກໍຍັງມີ ທ່ານຜູ້ຕາງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ, ບັນດາທ່ານຮອງຜູ້ອຳນວຍການໃຫຍ່ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ຮອງຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ, ຕາງໜ້າຜູ້ກວດສອບບັນຊີພາຍນອກ, ຄະນະກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ, ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ ເຂົ້າຮ່ວມກອງປະຊຸມ ແລະ ຄະນະກຳມະການກວດສອບພາຍໃນ ຂອງ ບໍລິສັດ ເຂົ້າຮ່ວມກອງປະຊຸມຄັ້ງນີ້.

ຫຼັງຈາກນັ້ນ ປະທານກອງປະຊຸມ ໄດ້ມອບໃຫ້ ທ່ານ ນາງ ລັດຕະນາ ປະທຸມວັນ ຜູ້ອຳນວຍການໃຫຍ່ ຂອງບໍລິສັດ ອະທິບາຍກ່ຽວກັບວິທີການລົງຄະແນນສຽງໃຫ້ທີ່ປະຊຸມຊາບ ແລະ ລາຍງານແຕ່ລະວາລະຂອງການປະຊຸມ, ຊຶ່ງລາຍລະອຽດມີດັ່ງນີ້:

1. **ການລົງຄະແນນສຽງ**:

- ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ປະທານຈະຖາມກອງປະຊຸມວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ.
    * ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍໃສ່ຊ່ອງກາລົງມະຕິບໍ່ເຫັນດີ ໃນບັດລົງຄະແນນທີ່ເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າປະຊຸມ ແລະ ຍົກບັດທີ່ກາເຄື່ອງໝາຍນັ້ນຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນ ເພື່ອນຳໄປກວດນັບຄະແນນສຽງໃນວາລະນັ້ນໆ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດ ຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ.
    * ຖ້າຫາກບໍ່ມີຜູ້ຖືຮຸ້ນທ່ານໃດຍົກບັດ ໃຫ້ຖືວ່າເຫັນດີ ຕາມເລື່ອງທີ່ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ, ຍົກເວັ້ນກໍລະນີທີ່ຜູ້ຖືຮຸ້ນໄດ້ເຮັດເຄື່ອງໝາຍ ໃນໃບມອບສັນທະໄວ້ຢ່າງຈະແຈ້ງແລ້ວວ່າ ຈະລົງມະຕິບໍ່ເຫັນດີ, ຊຶ່ງບໍລິສັດໄດ້ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.
- ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງ ຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສັນທະນັ້ນ, ບໍລິສັດໄດ້ນຳເອົາການລົງຄະແນນສຽງຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສັນທະດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງ ໃນບັດລົງຄະແນນໃນກອງປະຊຸມຕື່ມອີກ.

2. ການນັບຜົນການລົງຄະແນນສຽງ:

- ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມປະຊຸມ ທີ່ອອກສຽງບໍ່ເຫັນດີ ມາຫັກລົບອອກຈາກຈຳນວນຮຸ້ນທັງໝົດ ຂອງຜູ້ທີ່ມາເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.
- ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມຮັບຊາບ ຫຼັງຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນຈຳນວນຈັກສ່ວນຮ້ອຍ, ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງຈາກທີ່ປະທານໄດ້ປະກາດ ໃຫ້ກອງປະຊຸມຮັບຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດ ຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມານັບເປັນຄະແນນສຽງຕື່ມອີກ.

ໂດຍອີງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ, ໃນກອງປະຊຸມສາມັນຜູ້ຖືຮຸ້ນ ຂອງບໍລິສັດໃນຄັ້ງນີ້ ບໍ່ອະນຸຍາດໃຫ້ຜູ້ສັງເກດການ ມີຄຳຖາມໃນເວລາດຳເນີນການປະຊຸມ, ມີພຽງແຕ່ຜູ້ຖືຮຸ້ນເທົ່ານັ້ນມີສິດຕັ້ງຄຳຖາມ ແລະ ປະກອບຄຳຄິດຄຳເຫັນ ກ່ຽວກັບວາລະການປະຊຸມ.

ເວລາຕໍ່ມາ, ຜູ້ອຳນວຍການໃຫຍ່ ໄດ້ເລີ່ມເຂົ້າສູ່ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ໂດຍໄດ້ລາຍງານເປັນແຕ່ລະວາລະ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

ວາລະທີ 1. ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນປະຈຳປີຜ່ານມາ

ຜູ້ອຳນວຍການໃຫຍ່ໄດ້ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນປະຈຳປີຜ່ານມາເພື່ອໃຫ້ຜູ້ຖືຮຸ້ນຮັບຊາບເຖິງຜົນສຳເລັດ ການຈັດຕັ້ງປະຕິບັດມະຕິກອງປະຊຸມດັ່ງກ່າວຄື: ກ່ຽວກັບວາລະທີ 1,2,3,4,5,6,7,9 ແມ່ນໄດ້ຈັດຕັ້ງປະຕິບັດຕາມແຜນການເຫັນດີ ຂອງປະຊຸມສາມັນຜູ້ຖືຮຸ້ນແລ້ວ. ແລະ ກ່ຽວກັບວາລະທີ 8 ແມ່ນກຳລັງຢູ່ໃນໄລຍະການຈັດຕັ້ງປະຕິບັດ, ເນື່ອງຈາກເປັນແຜນພັດທະນາທຸລະກິດ ຂອງບໍລິສັດ ຈາກປີ 2016-2025.

ຫຼັງຈາກຜູ້ອຳນວຍການໃຫຍ່ ໄດ້ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 1 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຕໍ່ມາ ປະທານກອງປະຊຸມ ໄດ້ແຈ້ງໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນຊາບວ່າ, ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມດັ່ງກ່າວ ແມ່ນລາຍງານໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ, ວາລະນີ້ແມ່ນບໍ່ມີການລົງຄະແນນສຽງ.

ກອງປະຊຸມໄດ້ຮັບຊາບຕາມການລາຍງານ ຂອງ ຜູ້ອຳນວຍການໃຫຍ່ ກ່ຽວກັບການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນປະຈຳປີຜ່ານມາທຸກປະການ.

ວາລະທີ 2. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017

ຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ທີ່ປະຊຸມກ່ຽວກັບບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017, ໄດ້ປະຊຸມເມື່ອວັນທີ 06 ເມສາ 2018 ໂດຍມີລາຍລະອຽດໃນເອກະສານຄັດຕິດ ເຊິ່ງໄດ້ຄັດຕິດພ້ອມກັບໜັງສືແຈ້ງເຊີນ ແລະ ສະພາບໍລິຫານ ໄດ້ຮັບຮອງຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ, ເຫັນດີສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນດັ່ງກ່າວ.

ຫຼັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 2 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານໄດ້ສະເໜີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017 ດັ່ງກ່າວ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2017, ວັນທີ 06 ເມສາ 2018, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.517.527.105 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 3. ພິຈາລະນາ ແລະ ຮັບຮອງລາຍງານການເງິນ 6 ເດືອນຕົ້ນປີ 2018 (01/01/2018-30/06/2018) ແລະ ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2018

ຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ທີ່ປະຊຸມ ອີງຕາມການມອບອຳນາດຈາກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2012 ເມື່ອວັນທີ 22 ເມສາ 2013; ການເຄື່ອນໄຫວທຸລະກິດ ຂອງ ບໍລິສັດໃນ 6 ເດືອນຕົ້ນປີ 2018 ມີກຳໄລສຸດທິປະມານ 95,39 ຕື້ກີບ, ຊຶ່ງຜູ້ກວດສອບພາຍນອກໄດ້ມີການທົບທວນແລ້ວ ແລະ ບໍລິສັດໄດ້ເປີດເຜີຍລາຍງານດັ່ງກ່າວໃນເວັບໄຊທ໌ ຂອງ ຕະຫຼາດຫຼັກຊັບລາວ ແລະ ເວັບໄຊທ໌ ຂອງ ບໍລິສັດ.

ບໍລິສັດ ໄດ້ຈ່າຍເງິນປັນຜົນ 6 ເດືອນຕົ້ນປີ 2018 ໃຫ້ຜູ້ຖືຮຸ້ນທີ່ມີລາຍຊື່ໃນປຶ້ມບັນຊີຜູ້ຖືຮຸ້ນທີ່ໄດ້ກຳນົດສິດ ຂອງ ຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ **19 ກັນຍາ 2018** ໃນອັດຕາ **110** ກີບຕໍ່ຮຸ້ນ, ລວມເງິນປັນຜົນທີ່ຈ່າຍທັງໝົດປະມານ **184,72** ຕື້ກີບ ແລະ ໄດ້ຈ່າຍເງິນປັນຜົນດັ່ງກ່າວໃຫ້ຜູ້ຖືຮຸ້ນ ໃນວັນທີ **3 ຕຸລາ 2018.**

ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງເອົາລາຍງານການເງິນ 6 ເດືອນຕົ້ນປີ 2018 ແລະ ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2018.

ຫຼັງຈາກຜູ້ອຳນວຍການໃຫຍ່ ໄດ້ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 3 ແລ້ວ, ປະທານກອງປະຊຸມ ໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2018 ແລະ ຮັບຮອງເອົາລາຍງານການເງິນ 6 ເດືອນຕົ້ນປີ 2018, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ເຫັນດີ ຮັບຮອງເອົາການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2018 ພາຍຫຼັງການຫັກເປັນຄັງສຳຮອງຕາມລະບຽບການ, ໃຫ້ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ 19 ກັນຍາ 2018 ໃນອັດຕາຮຸ້ນລະ 110 ກີບຕໍ່ຮຸ້ນ, ລວມເປັນເງິນປັນຜົນຈ່າຍທັງໝົດ 184,72 ຕື້ກີບ ແລະ ກຳນົດຈ່າຍເງິນປັນຜົນໃນວັນທີ 3 ຕຸລາ 2018 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.517.527.105 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 4. ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດ ຂອງ ບໍລິສັດ ປີ 2018 ລວມທັງລາຍງານການເງິນຂອງບໍລິສັດ ປີ 2018 ແລະ ແຜນການດຳເນີນທຸລະກິດ ຂອງ ບໍລິສັດປີ 2019.

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ກອງປະຊຸມເພື່ອພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດ ຂອງ ບໍລິສັດ ປີ 2018 ລວມທັງລາຍງານການເງິນ ຂອງ ບໍລິສັດ ປີ 2018 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດປີ 2019 ຊຶ່ງມີດັ່ງລຸ່ມນີ້:

ໃນປີ 2018 ການດຳເນີນທຸລະກິດຂອງ ບໍລິສັດ ໄດ້ມີການປັບປຸງການຄຸ້ມຄອງບໍລິຫານພາຍໃນບໍລິສັດ ເພື່ອໃຫ້ສອດຄ່ອງກັບກົດລະບຽບ ແລະ ກົດໝາຍຕ່າງໆ ຂອງ ບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫລາດຫລັກຊັບລາວ ແລະ ໄດ້ເຂົ້າໄປຖືຮຸ້ນໃນ 05 ເຂື່ອນຜູ້ຜະລິດໄຟຟ້າເອກະລາດ ເຮັດໃຫ້ມີທຶນຈົດທະບຽນທັງໝົດ 6.717.214.788.000 ກີບ, ມີຮຸ້ນທັງໝົດ 1.679.303.697 ຮຸ້ນ. ການດຳເນີນທຸລະກິດ ໃນປີ 2018 ມີດັ່ງນີ້:

- ການຜະລິດທັງໝົດ 5.081,87 GWh
- ລາຍຮັບ 1.143,34 ຕື້ກີບ
- ບໍລິສັດມີກຳໄລສຸດທິທັງໝົດປະມານ 74,79 ຕື້ກີບ
- ບຸກຄະລາກອນທັງໝົດມີ 689 ຄົນ, ມີຍິງ 118 ຄົນ

ສະເພາະລາຍງານການເງິນຂອງບໍລິສັດປີ 2018 ເຊິ່ງຜູ້ກວດສອບບັນຊີພາຍນອກໄດ້ກວດສອບແລ້ວ, ມີລາຍລະອຽດໃນໜັງສືແຈ້ງເຊີນ ແລະໄດ້ເປີດເຜີຍໃນເວັບໄຊທ໌ ຂອງ ຕະຫລາດຫລັກຊັບລາວ ແລະ ເວັບໄຊທ໌ ຂອງ ບໍລິສັດແລ້ວ.

ພ້ອມກັນນັ້ນ ໄດ້ສ້າງຕັ້ງບໍລິສັດບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ອີດີແອນເຈັນ ຈຳກັດ (EDL-GEN O&M), ຊຶ່ງເປັນບໍລິສັດລູກຂອງບໍລິສັດ, ເປັນການລົງທຶນ 100 ສ່ວນຮ້ອຍຂອງບໍລິສັດ, ຈຸດປະສົງໃນການສ້າງຕັ້ງບໍລິສັດ EDL-GEN O&M ເພື່ອ:

- ໃຫ້ບໍລິການໃນດ້ານການຄຸ້ມຄອງ ແລະ ບຳລຸງຮັກສາເຂື່ອນຕ່າງໆ.
- ໃຫ້ບໍລິການການສ້ອມແປງເຄື່ອງຈັກຂະໜາດນ້ອຍ ແລະ ຂະໜາດໃຫຍ່ຢູ່ພາຍໃນເຂື່ອນ ແລະ ສະຖານີ.
- ໃຫ້ບໍລິການສະໜອງວິຊາການ, ວິສະວະກອນ, ຜູ້ຊ່ຽວຊານໃຫ້ກັບເຂື່ອນຕ່າງໆ ແລະ ສະຖານີ.

ບໍລິສັດ EDL-GEN O&M ມີແຜນຈະໄປຮັບບໍລິການຄຸ້ມຄອງ ແລະ ບຳລຸງຮັກສາໃນບັນດາ ໂຄງການເຂື່ອນ IPP ທີ່ຢູ່ໃນໄລຍະກໍ່ສ້າງ, ເຂື່ອນ IPP ທີ່ຢູ່ໃນໄລຍະການເຮັດ Operation/ Maintenance, ປັດ ຈຸບັນກຳລັງກະກຽມວິຊາການທີ່ມີຄຸນວຸດທິ, ມີຄວາມຮູ້ຄວາມສາມາດທີ່ແນ່ນອນ ເພື່ອປະກອບຮັບບໍລິການຄຸ້ມຄອງ ແລະ ບຳລຸງຮັກສາໃຫ້ໂຄງການດັ່ງກ່າວ.

ນອກຈາກນັ້ນ ບໍລິສັດຍັງໄດ້ປະຕິບັດຕາມລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ ເຊັ່ນໄດ້ມອບພັນທະ ໃຫ້ລັດຖະບານປະກອບມີຄ່າພາກຫຼວງ 1 ສ່ວນຮ້ອຍ ຂອງລາຍຮັບຈາກການຂາຍກະແສໄຟຟ້າ, ອາກອນກຳໄລ 10ສ່ວນ ຮ້ອຍ, ອາກອນເງິນປັນຜົນ 10 ສ່ວນຮ້ອຍ ແລະ ອາກອນລາຍໄດ້ຂອງບຸກຄົນ ລວມທັງໝົດປະມານ 119,91 ຕື້ກີບ.

ອີກດ້ານໜຶ່ງບໍລິສັດໄດ້ໃຫ້ຄວາມສຳຄັນ ແລະ ໄດ້ເອົາໃຈໃສ່ໃນການພັດທະນາບຸກຄະລາກອນໃຫ້ນັບ ມື້ນັບເຂັ້ມແຂງ ມີຄວາມຮູ້ຄວາມສາມາດ ເພື່ອກ້າວໄປເຖິງທຽບເທົ່າກັບສາກົນ.

ພ້ອມກັນນັ້ນ ວຽກງານສັງຄົມ ແລະ ສິ່ງແວດລ້ອມ ໂດຍໄດ້ປະກອບສ່ວນເປັນຈຳນວນຫລາຍ ສົມຄວນ ພ້ອມທັງໄດ້ສ້າງກົດຈະກຳຮ່ວມກັບຊາວບ້ານອ້ອມຂ້າງເຂື່ອນທີ່ບໍລິສັດຄຸ້ມຄອງ ເປັນຕົ້ນແມ່ນການປູກຕົ້ນໄມ້ ແລະ ປ່ອຍປາ, ມອບອຸປະກອນການສຶກສາໃຫ້ໂຮງຮຽນອ້ອມຂ້າງເຂື່ອນໄຟຟ້າ, ມອບອຸປະກອນການແພດໃຫ້ສຸກສາລາ ແລະ ບໍລິຈາກເຄື່ອງນຸ່ງຫົ່ມໃຫ້ປະຊາຊົນທີ່ຂາດເຂີນຢູ່ອ້ອມຂ້າງເຂື່ອນ; ລວມເປັນເງິນທັງໝົດປະມານ 3,18 ຕື້ກີບ ລາຍລະອຽດມີໃນໜັງສືແຈ້ງເຊີນ ທີ່ໄດ້ເປີດເຜີຍໃຫ້ບັນດາທ່ານຊາບແລ້ວ.

ໃນປີ 2019, ບໍລິສັດຈະປະຕິບັດວຽກງານ ແລະດຳເນີນທຸລະກິດໂດຍອີງຕາມນະໂຍບາຍອັນຊັດເຈນ ຂອງບໍລິສັດໃນການຕອບສະໜອງເງິນປັນຜົນຢ່າງສົມເຫດສົມຜົນໃຫ້ຜູ້ຖືຮຸ້ນ ພ້ອມທັງເຮັດໃຫ້ການດຳເນີນທຸລະກິດ ການຜະລິດກະແສໄຟຟ້າມີຄວາມໝັ້ນຄົງຢ່າງຕໍ່ເນື່ອງ ແລະ ບໍລິສັດຈະໄດ້ສືບຕໍ່ວາງແຜນການດຳເນີນທຸລະກິດດ້ວຍຕົວ ເລກຄາດໝາຍທີ່ອາດມີຄວາມເປັນໄປໄດ້ໃນເບື້ອງລາຍຮັບ ແລະ ໄດ້ວາງຕົວເລກຄາດໝາຍຢ່າງຮັດກຸມໃນເບື້ອງລາຍ ຈ່າຍ. ຄາດວ່າບໍລິສັດມີແຜນຈະສືບຕໍ່ລົງທຶນໃນບັນດາເຂື່ອນໄຟຟ້າຕ່າງໆ ເຊັ່ນ:

1). ໂຄງການທີ່ລັດວິສາຫະກິດໄຟຟ້າລາວລົງທຶນ.
2). ໂຄງການທີ່ລັດວິສາຫະກິດໄຟຟ້າລາວເຂົ້າຖືຮຸ້ນ
3). ໂຄງການທີ່ບໍລິສັດມີແຜນຈະລົງທຶນ ແລະ ເຂົ້າຮ່ວມທຶນກັບຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ.

ລາຍລະອຽດໃນໜັງສືແຈ້ງເຊີນ ທີ່ໄດ້ເປີດເຜີຍໃຫ້ບັນດາທ່ານຊາບໃນເວັບໄຊທ໌ ຂອງ ຕະຫຼາດຫຼັກຊັບ ລາວ ແລະ ເວັບໄຊທ໌ ຂອງ ບໍລິສັດແລ້ວ.

ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນພິຈາລະນາຮັບ ຮອງເອົາບົດລາຍງານການດຳເນີນທຸລະກິດ 6 ເດືອນຕົ້ນປີ 2018 ລວມທັງລາຍງານການເງິນ ຂອງບໍລິສັດ 6 ເດືອນ ຕົ້ນປີ 2018 ແລະ ແຜນການດຳເນີນທຸລະກິດ ຂອງ ບໍລິສັດປີ 2019.

ຫຼັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 4 ແລ້ວ, ປະທານກອງປະຊຸມໄດ້ເປີດ ໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ທ່ານປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງບົດລາຍງານ ຜົນການດຳເນີນທຸລະກິດ ຂອງ ບໍລິສັດ ປີ 2018 ລວມທັງລາຍງານການເງິນ ຂອງ ບໍລິສັດປີ 2018 ແລະ ແຜນການດຳ ເນີນທຸລະກິດ ຂອງ ບໍລິສັດ ປີ 2019 ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິ ເຫັນດີ ຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2018 ລວມທັງລາຍງານການເງິນຂອງບໍລິສັດ ປີ 2018 ແລະ ແຜນການດຳເນີນທຸລະກິດຂອງບໍລິສັດ ປີ 2019, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງ ຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.517.527.105 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 5. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2018 (01/07/2018-31/12/2018).

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມເພື່ອພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2018 (01/07/2018-31/12/2018) ອີງຕາມກົດລະບຽບ ຂອງ ບໍລິສັດ, ບໍລິສັດມີນະໂຍບາຍໃນການແບ່ງເງິນປັນຜົນໃນອັດຕາສ່ວນບໍ່ຫຼຸດ 50 ສ່ວນຮ້ອຍຂອງກຳໄລສຸດທິ, ພາຍຫຼັງຫັກເປັນຄັງ ສຳຮອງຕາມລະບຽບການ ແລະ ຄັງສຳຮອງອື່ນໆ (ຖ້າມີ) ໃນແຕ່ລະປີ ຊຶ່ງການແບ່ງເງິນປັນຜົນຈະຂຶ້ນຢູ່ກັບສະພາບ ເສດຖະກິດ ແລະ ແຜນການລົງທຶນຕ່າງໆໃນອະນາຄົດ.

ບໍລິສັດມີກຳໄລສຸດທິຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2018 ເປັນເງິນຈຳນວນທັງໝົດ **74,79** ຕື້ກີບ. ສະເໜີກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ຂອງບໍລິສັດ 6 ເດືອນທ້າຍປີ 2018 ພາຍຫຼັງການຫັກເປັນຄັງສຳຮອງຕາມລະບຽບການ ແລະ ຈາກເງິນສະສົມໄວ້ໃນ ຊຸມປີຜ່ານມາ, ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການໄດ້ຮັບເງິນປັນຜົນ ໃນວັນທີ **24 ເມສາ 2019** ໃນອັດຕາ **160** ກີບຕໍ່ຮຸ້ນ, ລວມເປັນເງິນປັນຜົນຈ່າຍທັງໝົດ **268,68** ຕື້ກີບ ແລະ ກຳນົດຈ່າຍເງິນປັນຜົນໃນວັນທີ **09 ພຶກສະພາ 2019.**

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາອະນຸມັດການ ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນທ້າຍປີ 2018 ດັ່ງກ່າວ.

ຫຼັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 5 ແລ້ວ, ປະທານກອງປະຊຸມໄດ້ ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານ ໃດມີຄຳຖາມແຕ່ຢ່າງໃດ.

ຈາກນັ້ນ ປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນ ຜົນຈາກຜົນການດຳເນີນທຸລະກິດ 6 ເດືອນທ້າຍປີ 2018, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງ ຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ອະນຸມັດການຈ່າຍເງິນປັນຜົນຈາກ ຜົນ ການດຳເນີນທຸລະກິດ 6 ເດືອນທ້າຍປີ 2018 (01/07/2018-31/12/2018) ພາຍຫຼັງ ການຫັກເປັນຄັງສຳຮອງຕາມລະບຽບການ ແລະ ຈາກເງິນສະສົມໄວ້ໃນຊຸມປີຜ່ານມາ, ໃຫ້ ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງ ຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ 24 ເມສາ 2019 ໃນອັດຕາຮຸ້ນລະ 160 ກີບ

ຕໍ່ຮຸ້ນ, ລວມເປັນເງິນປັນຜົນຈ່າຍທັງໝົດ 268,68 ຕື້ກີບ ແລະກຳນົດຈ່າຍເງິນປັນຜົນໃນ ວັນທີ 09 ພຶດສະພາ 2019. ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງ ໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.519.334.938 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງ ໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 6. ພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ ກວດສອບບັນຊີພາຍນອກ ປີ 2019.

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມເພື່ອພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ກວດສອບ ບັນຊີພາຍນອກ ແລະ ການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ປີ 2019 ໂດຍ ບໍລິສັດ ສະເໜີແຕ່ງຕັ້ງຜູ້ ກວດສອບບັນຊີຄື: ບໍລິສັດ PricewaterhouseCoopers (Lao) Co., Ltd. (PWC) ເປັນຜູ້ກວດສອບບັນຊີ ພາຍນອກຂອງບໍລິສັດ ສຳລັບປີ 2019, ເນື່ອງຈາກວ່າ ບໍລິສັດ PWC ຊະນະການປະກວດລາຄາ ແລະ ໃນໄລຍະຜ່ານ ມາ ບໍລິສັດ PWC ໄດ້ມີຜົນງານການກວດສອບບັນຊີໃຫ້ບໍລິສັດແຕ່ປີ 2011-2015 ໃນຖານະທີ່ເປັນຜູ້ກວດສອບ ບັນຊີອິດສະຫລະ ເຫັນວ່າບໍລິສັດດັ່ງກ່າວມີຄວາມລະອຽດຮອບຄອບໃນການທົບທວນ ແລະ ການກວດສອບບັນຊີຂອງ ບໍລິສັດ; ໂດຍໄດ້ມີການກຳນົດຄ່າຈ້າງຂອງຜູ້ກວດສອບບັນຊີພາຍນອກ ສຳລັບປີ 2019 ເປັນຈຳນວນເງິນບໍ່ເກີນ 771.931.600 ກີບ. (ມີລາຍລະອຽດໃນໜັງສືແຈ້ງເຊີນທີ່ໄດ້ເປີດເຜີຍໃຫ້ບັນດາທ່ານຊາບແລ້ວ).

ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດ ແລະ ຄົບຖ້ວນແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງ ຂອງ ຜູ້ກວດສອບບັນຊີພາຍນອກດັ່ງກ່າວ.

ຫຼັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 6 ແລ້ວ, ປະທານກອງປະຊຸມໄດ້ເປີດ ໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີ ຄຳຖາມ.

ຈາກນັ້ນປະທານກອງປະຊຸມ ຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງຜູ້ ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າຈ້າງ ຂອງ ຜູ້ກວດສອບບັນຊີພາຍນອກ ປີ 2019, ວາລະນີ້ກອງປະຊຸມ ຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ອະນຸມັດການແຕ່ງຕັ້ງຜູ້ກວດສອບ ບັນຊີພາຍນອກຄືບໍລິສັດ PricewaterhouseCoopers (Lao) Co., Ltd. (PWC) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດສຳລັບປີ 2019, ໂດຍຄ່າຈ້າງຂອງຜູ້ກວດ ສອບບັນຊີພາຍນອກສຳລັບປີ 2019 ເປັນຈຳນວນເງິນບໍ່ເກີນ 771.931.600 ກີບ, ດ້ວຍ ຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງ ປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.519.334.938 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງ ໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 7. ພິຈາລະນາ ແລະ ອະນຸມັດການລົງທຶນໃນໂຄງການ EDL-Gen Energy Complex Plaza

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມ ເພື່ອເປັນການສືບຕໍ່ຂະຫຍາຍທຸລະກິດ ຂອງ ຜ-ຟຟລ ໃຫ້ເຕີບໃຫຍ່ຕາມແຜນພັດທະນາຂອງບໍລິສັດ, ສະເໜີກອງປະຊຸມພິຈາລະນາ ແລະ ອະນຸມັດການລົງທຶນໃນທຸລະກິດສຳຮອງຄື: ລົງທຶນໃນໂຄງການ EDL-Gen Energy Complex Plaza, ໂດຍຊັດສ່ວນການຮ່ວມທຶນຂອງ 3 ຂາຮຸ້ນ ປະກອບມີ: (1) EDL-Gen ຈຳນວນ 80 ສ່ວນຮ້ອຍ; (2) AVIC-INTL Project Engineering Company (AVIC) ຈຳນວນ 10 ສ່ວນຮ້ອຍ; (3) Guizhou Transportation Planning Survey & Design Academe Co., LTD (GSDC) ຈຳນວນ 10 ສ່ວນຮ້ອຍ, ທຶນຈົດທະບຽນໃນການສ້າງຕັ້ງບໍລິສັດ EDL-Gen Energy Complex Plaza ເທົ່າກັບ 18 ລ້ານໂດລາສະຫະລັດ.

ທີ່ຕັ້ງຂອງໂຄງການ: ຕັ້ງຢູ່ຖະໜົນອາຊຽນ, ໜ່ວຍ 10, ບ້ານ ສີບຸນເຮືອງ, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ. ມີເນື້ອທີ່ດິນ 12,552 ແມັດກາເລ້.

ຈຸດປະສົງຫລັກຂອງໂຄງການ: ເພື່ອລົງທຶນ, ພັດທະນາກໍ່ສ້າງ ແລະ ບໍລິຫານໂຄງການ, ໂຄງການນີ້ມີທັງໝົດ 16 ຊັ້ນ ໃນນີ້ຈະເຮັດເປັນຫ້ອງການສູນການຄ້າ, ຫ້ອງປະຊຸມ ແລະ ມີສະຖານທີ່ຈອດລົດຊັ້ນໃຕ້ດິນ 2 ຊັ້ນເຄິ່ງ ສາມາດຮັບຮອງຈອດລົດໄດ້ປະມານ 1.300 ຄັນ. ມູນຄ່າຂອງໂຄງການເທົ່າກັບປະມານ 75,19 ລ້ານໂດລາສະຫະລັດ.

ຜົນຂອງການສຶກສາຄວາມເປັນໄປໄດ້ໃນການກໍ່ສ້າງໂຄງການເຫັນວ່າ ອັດຕາຜົນຕອບແທນ ຂອງ ໂຄງ ການ 13,62 ສ່ວນຮ້ອຍ, ຈະໃຊ້ເວລາໃນການກໍ່ສ້າງປະມານ 2 ປີ ແລະ ຜົນປະໂຫຍດທີ່ຄາດວ່າຈະໄດ້ຮັບມີດັ່ງນີ້:

- ໄດ້ຮັບຈາກຄ່າເຊົ່າດິນ 15,06 ລ້ານສະຫະລັດ/30 ປີ.
- ໄດ້ຮັບເງິນປັນຜົນ 80 ສ່ວນຮ້ອຍຂອງຈຳນວນເງິນປັນຜົນຂອງແຕ່ລະປີ.
- ທີ່ດິນຍັງຄົງເປັນຊັບສິນຂອງ ຜ-ຟຟລ ຄືເກົ່າ, ເຊິ່ງທີ່ດິນດັ່ງກ່າວຈະມີມູນຄ່າເພີ່ມຂຶ້ນເນື່ອງຈາກເປັນເຂດດ້ານການພັດທະນາທຸລະກິດ.

ແລະ ສະເໜີກອງປະຊຸມມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ຂອງບໍລິສັດ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນ ດັ່ງກ່າວເປັນຜູ້ມີອຳນາດໃນການຕົກຕໍ່, ເຈລະຈາ, ກຳນົດເງື່ອນໄຂ, ມູນຄ່າໂຄງການ ແລະ ລາຍລະອຽດທີ່ກ່ຽວຂ້ອງ, ດັດແກ້, ເພີ່ມເຕີມ, ຕີກລົງ, ການດຳເນີນການ, ລົງນາມ, ສົ່ງມອບເອກະສານ ແລະ/ຫຼື ສັນຍາຕ່າງໆ ທີ່ກ່ຽວຂ້ອງກັບການລົງທຶນໂຄງການດັ່ງກ່າວ, ຊຶ່ງລວມເຖິງແຕ່ບໍ່ຈຳກັດພຽງ ສັນຍາຮ່ວມຮຸ້ນ, ສັນຍາເງິນກູ້ ແລະ ສັນຍາກໍ່ສ້າງໂຄງການ ລວມເຖິງແຕ່ບໍ່ຈຳກັດພຽງການເປີດເຜີຍຂໍ້ມູນໃດໜຶ່ງທີ່ກ່ຽວຂ້ອງ, ການຕົກຕໍ່, ການໃຫ້ຂໍ້ຄວາມ, ຂໍ້ມູນແກ່ໜ່ວຍງານຂອງລັດ ແລະ/ຫຼື ອົງການລັດຕ່າງໆທີ່ກ່ຽວຂ້ອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວ ຕະຫຼອດຈົນການກະກຽມ, ດັດແກ້, ເພີ່ມເຕີມ ແລະ/ຫຼື ປ່ຽນແປງຂໍ້ມູນທີ່ກ່ຽວຂ້ອງ ທີ່ຈະຕ້ອງເປີດເຜີຍ ລວມເຖິງການດຳເນີນການໃດໜຶ່ງທີ່ຈຳເປັນ ແລະ ກ່ຽວເນື່ອງກັບການດຳເນີນການດັ່ງກ່າວ ໄດ້ທຸກຢ່າງຈົນສຳເລັດ.

ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ອະນຸມັດການລົງທຶນໃນໂຄງການ EDL-Gen Energy Complex Plaza ແລະ ການມອບອຳນາດໃຫ້ສະພາບໍລິຫານຕາມທີ່ໄດ້ສະເໜີດັ່ງກ່າວຂ້າງເທິງທຸກປະການ.

ຫຼັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 7 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ເວລາຕໍ່ມາ ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ອະນຸມັດການລົງທຶນໃນໂຄງການ EDL-Gen Energy Complex Plaza ແລະ ການມອບອຳນາດດັ່ງກ່າວ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດ ດ້ວຍຄະແນນສຽງຢ່າງໜ້ອຍສອງສ່ວນສາມ (2/3) ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຢ່າງໜ້ອຍແປດສິບສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ມະຕິ: **ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ອະນຸມັດການລົງທຶນໃນໂຄງການ EDL-Gen Energy Complex Plaza, ໂດຍຊັດສ່ວນການຮ່ວມທຶນຂອງ 3 ຂາຮຸ້ນ ປະກອບມີ: (1) EDL-Gen ຈຳນວນ 80 ສ່ວນຮ້ອຍ; (2) AVIC-INTL Project Engineering Company (AVIC) ຈຳນວນ 10 ສ່ວນຮ້ອຍ; (3) Guizhou Transportation Planning Survey & Design Academe Co., LTD (GSDC) ຈຳນວນ 10 ສ່ວນຮ້ອຍ. ທຶນຈົດທະບຽນໃນການສ້າງຕັ້ງບໍລິສັດ EDL-Gen Energy Complex Plaza ເທົ່າກັບ 18 ລ້ານໂດລາສະຫະລັດ. ທີ່ຕັ້ງຂອງໂຄງການ: ຕັ້ງຢູ່ຖະໜົນອາຊຽນ, ໜ່ວຍ 10, ບ້ານ ສີບຸນເຮືອງ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ. ມີເນື້ອທີ່ດິນ 12,552 ແມັດກາເລ້, ມູນຄ່າຂອງໂຄງການເທົ່າກັບປະມານ 75,19 ລ້ານໂດລາສະຫະລັດ.**

ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ຂອງບໍລິສັດ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນ ດັ່ງກ່າວເປັນຜູ້ມີອຳນາດໃນການຕິດຕໍ່, ເຈລະຈາ, ກຳນົດເງື່ອນໄຂ, ມູນຄ່າໂຄງການ ແລະ ລາຍລະອຽດທີ່ກ່ຽວຂ້ອງ, ດັດແກ້, ເພີ່ມເຕີມ, ຕີລາຄາ, ການດຳເນີນການ, ລົງນາມ, ສິ່ງມອບເອກະສານ ແລະ/ຫຼື ສັນຍາຕ່າງໆ ທີ່ກ່ຽວຂ້ອງກັບການລົງທຶນໂຄງການດັ່ງກ່າວ, ຊຶ່ງລວມເຖິງແຕ່ບໍ່ຈຳກັດພຽງ ສັນຍາຮ່ວມຮຸ້ນ, ສັນຍາເງິນກູ້ ແລະ ສັນຍາກໍ່ສ້າງໂຄງການ ລວມເຖິງແຕ່ບໍ່ຈຳກັດພຽງການເປີດເຜີຍຂໍ້ມູນໃດໜຶ່ງທີ່ກ່ຽວຂ້ອງ, ການຕິດຕໍ່, ການໃຫ້ຂໍ້ຄວາມ, ຂໍ້ມູນແກ່ໜ່ວຍງານຂອງລັດ ແລະ/ຫຼື ອົງການລັດຕ່າງໆທີ່ກ່ຽວຂ້ອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວ ຕະຫຼອດຈົນການກະກຽມ, ດັດແກ້, ເພີ່ມເຕີມ ແລະ/ຫຼື ປ່ຽນແປງຂໍ້ມູນທີ່ກ່ຽວຂ້ອງ ທີ່ຈະຕ້ອງເປີດເຜີຍ ລວມເຖິງການດຳເນີນການໃດໜຶ່ງທີ່ຈຳເປັນ ແລະ ກ່ຽວເນື່ອງກັບການດຳເນີນການດັ່ງກ່າວ ໄດ້ທຸກຢ່າງຈົນສຳເລັດ, ກອງປະຊຸມໄດ້ອະນຸມັດດ້ວຍຄະແນນສຽງຫຼາຍກວ່າສອງສ່ວນສາມ (2/3) ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຫຼາຍກວ່າແປດສິບສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດດັ່ງນີ້:

(ກ) ຈຳນວນຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ:

1. **ເຫັນດີຈຳນວນ 365 ຄົນ, ເທົ່າກັບ 99,180 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.**
2. **ບໍ່ເຫັນດີຈຳນວນ 5 ຄົນ, ເທົ່າກັບ 0,819 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ**

(ຂ) **ຈຳນວນສຽງ (ຮຸ້ນ) ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ:**

1. **ເຫັນດີ 1.506.883.614 ສຽງ (ຮຸ້ນ), ເທົ່າກັບ 89,732 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.**
2. **ບໍ່ເຫັນດີ 12.451.324 ສຽງ (ຮຸ້ນ), ເທົ່າກັບ 0,741 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.**

ຖືວ່າໄດ້ພິຈາລະນາຄົບວາລະການປະຊຸມແລ້ວ, ແລະ ປະທານໄດ້ສະເໜີທີ່ປະຊຸມເພື່ອປະກອບຄຳຄິດຄຳເຫັນຕື່ມ, ແລະ ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ໃນຕອນທ້າຍຂອງການປະຊຸມ ປະທານກອງປະຊຸມ ໄດ້ແຈ້ງໃຫ້ທີ່ປະຊຸມຊາບກ່ຽວກັບຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມຮອດເວລາປິດກອງປະຊຸມ, ມີຈຳນວນຜູ້ຖືຮຸ້ນເຂົ້າຮ່ວມປະຊຸມດ້ວຍຕົນເອງມີຈຳນວນ 140 ທ່ານ ແລະ ມີຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຜູ້ຖືຮຸ້ນຈຳນວນ 230 ທ່ານ ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 370 ຄົນ ຖືຮຸ້ນລວມກັນ 1.519.334.938 ຮຸ້ນ ເທົ່າກັບ 90,46 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ແລະ ຕໍ່ມາປະທານກອງປະຊຸມ ໄດ້ກ່າວຄຳຂອບໃຈບັນດາທ່ານຜູ້ຖືຮຸ້ນ ແລະ ແຂກຜູ້ທີ່ມີກຽດທຸກໆ ທ່ານ, ເນື່ອງໃນໂອກາດປີໃໝ່ລາວ ພສ 2562 ທີ່ໃກ້ຈະມາເຖິງນີ້, ຂ້າພະເຈົ້າຂໍອວຍພອນໄຊບັນດາທ່ານຜູ້ຖືຮຸ້ນ, ຄະນະສະພາບໍລິຫານບໍລິສັດ, ກອງເລຂາຕ່າງໆ ຈົ່ງມີສຸຂະພາບເຂັ້ມແຂງແຂງແຮງ, ປະສົບຜົນສຳເລັດໃນໜ້າທີ່ວຽກງານ ແລະ ຈົ່ງມີສຸຂະພາບເຂັ້ມແຂງ ຕະຫຼອດໄປ.

ກອງປະຊຸມໄດ້ພິຈາລະນາຄົບຖ້ວນຕາມວາລະກອງປະຊຸມແລ້ວ, ບໍ່ມີເລື່ອງໃດທີ່ຈະພິຈາລະນາຕື່ມ, ປະທານກອງປະຊຸມ ໄດ້ກ່າວປິດກອງປະຊຸມເວລາ 16:00 ໂມງ.

ປະທານກອງປະຊຸມ

ບຸນອຸ້ມ ສີວັນເພັ້ງ

ຮັບຮອງຖືກຕ້ອງ

ສັດຕະນາ ປະທຸມວັນ

